ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

13-16 ເມສາ 2022
ປີທີ 11
ສະບັບທີ 835

# ປະທານສະພາແຫ່ງຊາດ ລາວ - ກູບາ ພົບປະຜ່ານລະບົບວິດີໂອທາງໄກ



(ສພຊ) ວັນທີ 8 ເມສາ 2022 ສະຫາຍ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ພົບປະທາງໄກ ກັບສະຫາຍ ເອັສເຕບານ ລາໂຊ ເຮີນານເດສ ປະທານສະພາແຫ່ງຊາດອຳນາດປະຊາຊົນ ແຫ່ງ ສ.ກູບາ ເຊິ່ງການພົບປະທາງໄກໃນຄັ້ງນີ້ ໄດ້ດຳເນີນໄປດ້ວຍບັນຍາກາດໄມຕີຈິດມິດຕະພາບອັນອົບອຸ່ນທີ່ມີຄວາມໝາຍຄວາມສຳຄັນໃນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ທີ່ເປັນມູນເຊື້ອອັນດີງາມມາແຕ່ດົນນານບົນພື້ນຖານອຸດົມການສັງຄົມນິຍົມ ລະຫວ່າງສອງປະເທດ ລາວ-ກູບາ ເວົ້າລວມ, ເວົ້າສະເພາະ ແມ່ນການພົວພັນຮ່ວມມື ລະຫວ່າງ ສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສະພາແຫ່ງຊາດອຳນາດປະຊາຊົນ ແຫ່ງ ສ.ກູບາ ເພື່ອຜົນປະໂຫຍດລວມ ຂອງປະຊາຊົນສອງປະເທດລາວ ແລະ ກູບາ.

ໃນການພົບປະກັນຄັ້ງນີ້, ສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືໃນໄລຍະທີ່ຜ່ານມາ, ພ້ອມທັງແຈ້ງໃຫ້ກັນຊາບສະພາບການພົ້ນເດັ່ນ ຂອງແຕ່ລະປະເທດໃຫ້ກັນຊາບ ເປັນຕົ້ນແມ່ນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ດ້ວຍຜົນສຳເລັດອັນຈົບງາມ; ໄດ້ພິຈາລະນາຮັບຮອງເອົາຫລາຍບັນຫາທີ່ສຳຄັນຂອງຊາດ ເຊັ່ນ: ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2021 ແລະ ທິດທາງແຜນການປີ 2022 ແລະ ການຮັບມືກັບການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປລາວ ແລະ ຮ່ວມກັນຕີລາການພົວພັນ ແລະ ການຮ່ວມມື ລະຫວ່າງສອງປະເທດໃນໄລຍະຜ່ານມາ ເຫັນວ່າໄດ້ຮັບການເສີມຂະຫຍາຍດີຂຶ້ນ ເຊິ່ງສະແດງອອກມີການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງຂອງລັດຖະບານ, ບັນດາຂະແໜງການ ໃນລະດັບສູນກາງ ແລະ ທ້ອງຖິ່ນ, ການຮ່ວມມືທາງດ້ານເສດຖະກິດ, ການສຶກສາ, ສາທາລະນະສຸກ

ອ່ານຕໍ່ໜ້າ 2

## ປອ. ໄຊສົມພອນ ພົມວິຫານ

### ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ

## ອວຍພອນເນື່ອງໃນໂອກາດປີໃໝ່ລາວ ພສ. 2565



ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າ ທີ່ຮັກແພງທັງຫລາຍ.

ເນື່ອງໃນໂອກາດສິ່ງທ້າຍປີເກົ່າ ພສ. 2564 ແລະ ຕ້ອນຮັບປີໃໝ່ ພສ 2565 ທີ່ຈະມາເຖິງນີ້, ຂ້າພະເຈົ້າ ຕາງໜ້າໃຫ້ ສູນກາງພັກ, ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ກໍຄື ພະນັກງານ-ລັດຖະກອນ ຂອງສະພາແຫ່ງຊາດ, ສະພາປະຊາຊົນແຂວງ, ນະຄອນຫລວງວຽງຈັນ ຂໍຖືເອົາລຶກງາມຍາມດີ, ວັນທີ່ເປັນສິລິມຸງຄຸນນີ້ ສົ່ງຄຳອວຍພອນໄຊອັນປະເສີດ ມາຍັງພະນັກງານ, ທະຫານ, ຕຳຫລວດ ກໍຄື ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າ ຈົ່ງມີສຸຂະພາບແຂງແຮງ, ມີຄວາມສຸກກາຍສະບາຍໃຈ, ຫ່າງໄກຈາກພະຍາດໂລຄາ, ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

ປີ ພສ. 2564 ທີ່ຜ່ານໄປນັ້ນ ເຖິງວ່າສະພາບແວດລ້ອມຂອງພາກພື້ນ ແລະ ສາກົນ ໄດ້ມີການຜັນແປໄປຢ່າງສັບສົນ ສະຫລັບສັບຊ້ອນ ແລະ ຄາດເດົາໄດ້ຍາກ ມີທັງກາລະໂອກາດ ແລະສິ່ງທ້າທາຍຫລາຍຢ່າງ ຕໍ່ການພົວພັນ ແລະ ຮ່ວມມືສາກົນ ທີ່ບໍ່ພັດທະນາເສດຖະກິດ ໂດຍລວມໃນໂລກ ກໍຄືຕໍ່ປະເທດພວກເຮົາ. ສຳລັບປະເທດເຮົາແລ້ວຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ໄດ້ສົ່ງຜົນກະທົບຫລາຍດ້ານຕໍ່ການສ້າງສາພັດທະນາເສດຖະກິດ-ສັງຄົມ. ແຕ່ດ້ວຍຄວາມເອົາໃຈໃສ່ນຳພາຊີ້ນຳຂອງສູນກາງພັກ, ຄວາມເປັນເອກະພາບສູງໃນວຽກງານ

ອ່ານຕໍ່ໜ້າ 3

## ປຶກສາຫາລືການກະກຽມປະເມີນການຈັດຕັ້ງ ປະຕິບັດກົດໝາຍ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ



(ສພຊ) ໂດຍປະຕິບັດຕາມ ຄຳແນະນຳ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 03/ຄປຈ, ລົງວັນທີ 1 ເມສາ 2022 ວ່າດ້ວຍການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ ໃນວັນທີ 8 ເມສາ 2022 ຄະນະຮັບຜິດຊອບຊີ້ນຳການປະເມີນການຈັດຕັ້ງປະຕິບັດກົດໝາຍ ໄດ້ຈັດກອງປະຊຸມປຶກສາຫາລື (ແບບທາງໄກ) ກ່ຽວກັບການກະກຽມການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ເຊິ່ງມີ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ ພາຍໃຕ້ການເປັນປະທານຂອງ ທ່ານ ສຈ. ປອ ຈະເລີນ ເຍຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ, ຫົວໜ້າຄະນະຮັບຜິດຊອບຊີ້ນຳການປະເມີນການຈັດຕັ້ງປະຕິບັດກົດໝາຍ ເຂົ້າຮ່ວມມີບັນດາທ່ານໃນຄະນະຮັບຜິດຊອບ ແລະ ກອງເລຂາ, ທ່ານປະທານສະພາປະຊາຊົນແຂວງໃນ 17 ແຂວງ, ທ່ານຜູ້ຕາງໜ້າຈາກກະຊວງແຜນການແລະການລົງທຶນ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງການເງິນ ແລະ ລັດຖະກອນຂອງກຳມາທິການກົດໝາຍຈຳນວນໜຶ່ງ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 75/ຄປຈ, ລົງວັນທີ 25 ມີນາ 2022 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳ ແລະ ກອງເລຂາການປະເມີນຜົນການຈັດຕັ້ງປະຕິບັດ

ອ່ານຕໍ່ໜ້າ 2

## ປີໃໝ່ໂຊກໃຫຍ່ ໄຊງາມ ຫ່າງຫາຍຈາກພະຍາດໂລຄາທັງປວງ

ແລ້ວວັນເວລາກໍໝູນວຽນປ່ຽນໄປໃນທີ່ສຸດພວກເຮົາກໍກ້າວສູ່ປີໃໝ່ລາວ ຈສ. 1384; ພສ. 2565 ປີໃໝ່ລາວປີນີ້ພັກຍາວຫາກລວມວັນເສົາ-ອາທິດ 1 ເຂົ້າກໍເປັນ 5 ວັນພໍດີ.

ພວກເຮົາສະຫລອງປີໃໝ່ລາວປີນີ້ບໍ່ຄ່ອຍສະດວກສະບາຍ ເພາະການລະບາດຂອງພະຍາໂຄວິດ-19 ມັນມາແຮງຫລາຍ (ຮອບສາມ) ສະນັ້ນ, ຈະຕ້ອງພ້ອມກັນກຳແໜ້ນ ແລະ ເຊື່ອມຊຶມແຈ້ງການຕ່າງໆ ເປັນຕົ້ນແມ່ນ ແຈ້ງການຈາກຄະນະສະເພາະກິດຂັ້ນສູນກາງ ເລກທີ 370/ສພກ, ລົງວັນທີ 30 ມີນາ 2022; ຕິດຕາມໄປດ້ວຍແຈ້ງການຂອງຫ້ອງວ່າການສຳນັກງານນາຍົກ ເລກທີ 367/ຫສນຍ ລົງວັນທີ 23 ມີນາ 2022. (ທັງສອງແຈ້ງການນີ້ໜັງສືພິມເຮົາລົງພິມແລ້ວ) ບໍ່ທໍ່ນັ້ນ ຈະຕ້ອງຕິດຕາມແຈ້ງການທ້ອງຖິ່ນທີ່ຕົນອາໄສຢູ່ ບໍ່ວ່າຢູ່ໃນນະຄອນຫລວງ ກໍຄືແຂວງຕ່າງໆໃນຂອບ ເຂດທົ່ວປະເທດ.

ສຳຄັນທີ່ສຸດແມ່ນໝົດທຸກຄົນຕ້ອງໄດ້ປະຕິບັດຕົນຢ່າງເຂັ້ມງວດຕໍ່ແບບວິຖີດຳລົງຊີວິດແບບໃໝ່ (NEWNORMAL).

ອ່ານຕໍ່ໜ້າ 8

## ທາບທາມການປັບປຸງກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກສະບັບປັບປຸງ



(ສພຊ) ເພື່ອຮັບປະກັນໃຫ້ແກ່ການປັບປຸງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ໄດ້ດຳເນີນໄປຕາມຂັ້ນຕອນຂອງການປັບປຸງກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ, ພ້ອມທັງຮັບປະກັນໃຫ້ເນື້ອໃນຂອງກົດໝາຍມີຄວາມຄົບຖ້ວນ, ສົມບູນ ແລະ ສອດຄ່ອງກັບແນວທາງນະໂຍບາຍຂອງພັກ-ລັດ ໃນການຄຸ້ມຄອງເສດຖະ

ອ່ານຕໍ່ໜ້າ 2

## ກສຕສ ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນທີ່ເປັນເສນາທິການ



ໜ້າ 2



ໜ້າ 4

ໜ້າ 7



ໜ້າ 4



ໜ້າ 5



ໜ້າ 5



ໜ້າ 5

ປີເກົ່າຜ່ານໄປປີໃໝ່ວຽນມາ ຂໍອວຍພອນໄຊອັນປະເສີດໃຫ້ແກ່ບັນດາທ່ານການນຳພັກ - ລັດ ມີສຸຂະພາບເຂັ້ມແຂງ, ມີພາລະນາໄມສົມບູນ

## ປະທານ...

ແລະ ຂະແໜງການອື່ນໆ; ພ້ອມກັນນີ້, ສອງຝ່າຍ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດບົດບັນທຶກຊ່ວຍຈຳ (MOU) ວ່າດ້ວຍການຮ່ວມມື ລະຫວ່າງສອງອົງການນິຕິບັນຍັດນຳກັນ ແລະ ປຶກສາຫາລືກ່ຽວກັບການແລກປ່ຽນສິນຄ້ານຳກັນ.

ໃນໂອກາດດັ່ງກ່າວ, ສະຫາຍປະທານສະພາແຫ່ງຊາດລາວ ໃນນາມຕາງໜ້າໃຫ້ລັດຖະບານ, ສະພາແຫ່ງຊາດ ແລະ ປະຊາຊົນລາວບັນດາເຜົ່າ ສະແດງຄວາມຂອບໃຈ ມາຍັງລັດຖະບານ, ສະພາແຫ່ງຊາດອຳນາດປະຊາຊົນ ແລະ ປະຊາຊົນກູບາອ້າຍນ້ອງທີ່ໄດ້ໃຫ້ການຊ່ວຍເຫລືອອັນລ້ຳຄ່າແກ່ ສປປລາວ ບໍ່ວ່າໃນໄລຍະການປະຕິວັດຊາດ ກໍຄືການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປັດຈຸບັນ.

ພ້ອມດຽວກັນນັ້ນ, ສອງປະທານສະພາລາວ ແລະ ກູບາ ໄດ້ທົບທວນຄືນການພົວພັນຮ່ວມມືຂອງສອງອົງການນິຕິບັນຍັດນຳກັນ ໃນໄລຍະຜ່ານມາ ເຊິ່ງສະແດງອອກໄດ້ມີການແລກປ່ຽນຄະນະຜູ້ແທນນຳກັນໃນລະດັບປະທານສະພາ, ກຳມາທິການ, ຄະນະມິດຕະພາບລັດຖະສະພາ; ພ້ອມທັງໄດ້ສົ່ງສານຊົມເຊີຍ, ສານອວຍພອນ ເຊິ່ງກັນ ແລະກັນ ໃນໂອກາດວັນສຳຄັນຂອງຊາດ ແລະ ສະໜັບສະໜູນກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ; ຈາກນັ້ນ, ສະຫາຍປະທານສະພາແຫ່ງຊາດລາວໄດ້ສະເໜີໃຫ້ສະຫາຍປະທານສະພາແຫ່ງຊາດອຳນາດປະຊາຊົນ ສືບຕໍ່ຊຸກຍູ້ໃຫ້ລັດຖະບານ ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ, ຂໍ້ຕົກລົງ, ບົດບັນທຶກຄວາມເຂົ້າໃຈ ທີ່ພົວພັນເຖິງການຮ່ວມມືສອງຝ່າຍ ທີ່ໄດ້ຕົກລົງຮ່ວມກັນໃຫ້ເປັນຮູບປະທຳ ແລະ ມີປະສິດຜົນດີຂຶ້ນກວ່າເກົ່າ ເປັນຕົ້ນໃນຂົງເຂດສາທາລະນະສຸກ, ສຶກສາ-ກິລາ, ວິທະຍາສາດ-ເຕັກໂນໂລຊີ, ກະສິກຳ, ພະລັງງານ, ທ່ອງທ່ຽວ ແລະ ຂົງເຂດຕຸລາການ.

ໃນຕອນທ້າຍ, ທັງສອງປະທານອົງການນິຕິບັນຍັດ ກໍໄດ້ອວຍພອນ ເຊິ່ງກັນ ແລະກັນ, ເຊື້ອເຊີນເຊິ່ງກັນ ແລະກັນ ມາຢ້ຽມຢາມປະເທດ ໃນເວລາທີ່ພະຍາດໂຄວິດ-19 ຫາກຜ່ອນຄາຍລົງ ແລະ ມີຄວາມສະດວກທັງສອງຝ່າຍ.

## ປຶກສາຫາລື...

ຮັບຜິດຊອບຊີ້ນຳ ແລະ ກອງເລຂາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 03/ຄປຈ, ລົງວັນທີ 1 ເມສາ 2022 ວ່າດ້ວຍການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ, ແຜນການ ສະບັບເລກທີ 02/ຄປກໝ, ລົງວັນທີ 31 ມີນາ 2022 ກ່ຽວກັບການຕິດຕາມກວດກາ ແລະ ເກັບກຳຂໍ້ມູນການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ແລະ ຄຳຖາມເຈາະຈີ້ມຕໍ່ 4 ກົດໝາຍ ທີ່ຈະກະກຽມປະເມີນ ຄື: ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ; ນອກນັ້ນ, ກອງປະຊຸມໄດ້ປຶກສາຫາລືກ່ຽວກັບເນື້ອໃນ, ວິທີການ ແລະ ຮູບການ ໃນການກະກຽມປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບດັ່ງກ່າວ ເພື່ອຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ.

(ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ)

## ກສຕສ...

(ສພຊ) ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນ ທີ່ເປັນເສນາທິການໃຫ້ແກ່ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດ ແລະ ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ຂອງສະພາປະຊາຊົນແຂວງປະຈຳປີ 2021 ໃນລະຫວ່າງວັນທີ 07-09 ເມສາ 2022 ຢູ່ຫ້ອງປະຊຸມສູນກາງແນວລາວສ້າງຊາດ, ນະຄອນຫລວງວຽງຈັນ; ໂດຍການເປັນປະທານຂອງທ່ານ ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການ, ຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານຈາກ ກສຕສ ແລະ ສະພາປະຊາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ການດຳເນີນກອງປະຊຸມເຝິກອົບຮົມໃນຄັ້ງນີ້ ແມ່ນເປັນການປະຕິບັດຕາມແຜນການສ້າງຄວາມເຂັ້ມແຂງ ແລະ ຍົກລະດັບຂີດຄວາມສາມາດ ໃຫ້ລັດຖະກອນວິຊາການ ພາຍໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທັງເປັນການສືບຕໍ່ຈັດຕັ້ງປະຕິບັດຕາມແຜນ 5 ປີ ໂດຍມີວັດຖຸປະສົງເພື່ອສ້າງຄວາມເຂັ້ມແຂງ ແລະ ຍົກລະດັບຄວາມອາດສາມາດໃຫ້ແກ່ພະນັກງານ-ລັດຖະກອນ ທີ່ເປັນເສນາທິການ ໃຫ້ມີຄວາມຮັບຮູ້, ເຂົ້າໃຈ ແລະ ກຳແໜ້ນ ກ່ຽວກັບການປະຕິບັດວຽກງານຕາມສິດ ແລະ ພາລະບົດບາດຂອງສະພາແຫ່ງຊາດ ທັງເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງ ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນເປັນກ້າວໆ.

ກອງປະຊຸມ, ໄດ້ຮັບຟັງການນຳສະເໜີບົດຮຽນຈາກວິທະຍາກອນທີ່ມີຄວາມຮູ້ຄວາມສາມາດ ແລະ ມີປະສົບການຕົວຈິງມາຫລາຍປີ ໃນ 3 ຫົວຂໍ້ ເຊັ່ນ: ການຄົ້ນຄວ້າແຜນພັດທະນາເສດຖະກິດ-ສັງຄົມ ທີ່ຕິດພັນກັບບັນດາຄາດໝາຍເສດຖະກິດມະຫາພາກ, ການຈັດສັນງົບປະມານ ແລະ ການລົງທຶນ ໃນຂົງເຂດເສດຖະກິດ; ວິທີການຄິດໄລ່ລວມຍອດຜະລິດຕະພັນພາຍໃນ (GDP) ແລະ ການຄິດໄລ່ລວມຍອດລາຍໄດ້ແຫ່ງຊາດ (GNI) ແລະ ການເຄື່ອນໄຫວຕິດຕາມກວດກາວຽກງານໃນຂົງເຂດເສດຖະກິດ ແລະ ການວິເຄາະວິໄຈບັນຫາ, ການຂຽນບົດລາຍງານພາຍຫລັງການຕິດຕາມກວດກາຂອງສະພາແຫ່ງຊາດ; ຫົວບົດທັງໝົດທີ່ໄດ້ນຳມາສະເໜີໃນກອງປະຊຸມຄັ້ງນີ້ ແມ່ນມີຄວາມສຳຄັນ ແລະ ຈຳເປັນຫລາຍ ສຳລັບພະນັກງານລັດຖະກອນວິຊາການ ທີ່ເປັນເສນາທິການຊ່ວຍວຽກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ໃນໂອກາດນີ້, ທ່ານປະທານກອງປະຊຸມ ໄດ້ຮຽກຮ້ອງມາຍັງບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມເຝິກອົບຮົມໃນຄັ້ງນີ້ຈົ່ງເອົາໃຈໃສ່ຮັບຟັງ ແລະ ໃຊ້ເວລາທີ່ເປັນປະໂຫຍດ ຕິດຕາມ, ເກັບກຳຂໍ້ມູນ ແລະ ສົນທະນາແລກປ່ຽນບົດຮຽນນຳວິທະຍາກອນ ແລະ ໝູ່ເພື່ອນດ້ວຍກັນ ເພື່ອໃຫ້ເຂົ້າໃຈເປັນເອກະພາບກັນ ແລະ ນຳໄປໝູນໃຊ້ເຂົ້າໃນວຽກງານຕົວຈິງ ແລະ ເຊື່ອໝັ້ນວ່າ ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ ຈະໄດ້ທຸ້ມເທຄວາມພະຍາຍາມ ແລະ ເອົາໃຈໃສ່ໃຊ້ເວລາທີ່ຈຳກັດນີ້ ໃຫ້ເປັນປະໂຫຍດສູງສຸດ ເພື່ອເກັບກຳ, ຮຽນຮູ້ ແລະ ແລກປ່ຽນບົດຮຽນນຳກັນ, ປະກອບຄຳຄິດຄຳເຫັນ ແລະ ຊັກຖາມໃນບັນຫາຕ່າງໆ ໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ເຮັດໃຫ້ກອງປະຊຸມໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

(ໄຊໂສພາພອນ ມົ່ງມຸງຄຸນ)

## ທາບທາມ...

ກິດ-ສັງຄົມ ຕາມກົດໝາຍ ແລະ ສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງບັນດາອົງການລັດທີ່ຮັບຜິດຊອບໃນການຮັບ ແລະ ແກ້ໄຂຄຳຮ້ອງທຸກ ຕາມເນື້ອໃນຈິດໃຈມະຕິຂອງຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ວ່າດ້ວຍການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ສະບັບເລກທີ 037/ຄບສພ, ລົງວັນທີ 18 ມິຖຸນາ 2018 ແລະ ມະຕິກົມການເມືອງສູນກາງພັກວ່າດ້ວຍການຍົກສູງຄຸນນະພາບການດຳເນີນຄະດີຕາມຂະບວນການຍຸຕິທຳ ສະບັບເລກທີ 112/ກມສພ, ລົງວັນທີ 02 ມິຖຸນາ 2020 ແລະ ເພື່ອຮັບປະກັນໃຫ້ການຄົ້ນຄວ້າເນື້ອໃນການປັບປຸງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ການຈັດຕັ້ງການທາບທາມປະກອບຄຳເຫັນຢ່າງກວ້າງຂວາງ ແລະ ທັນຕາມກຳນົດເວລາ ຕາມແຜນການທີ່ໄດ້ກຳນົດໄວ້; ໃນລະຫວ່າງວັນທີ 8-9 ເມສາ 2022 ທີ່ຫ້ອງປະຊຸມຫ້ອງວ່າການປົກຄອງແຂວງຈຳປາສັກ ໄດ້ມີກອງປະຊຸມປັບປຸງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງ ຄັ້ງທີ 4 ໂດຍການເປັນປະທານຂອງທ່ານ ສີສູນທອນ ສ.ຜາບມີໄຊຍ໌ ຮອງປະທານກຳມາທິການຍຸຕິທຳ; ມີບັນດາທ່ານຜູ້ຕາງໜ້າຈາກກຳມາທິການກົດໝາຍ, ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ, ຫ້ອງວ່າການສຳນັກງານປະທານປະເທດ, ກະຊວງຍຸຕິທຳ, ອົງການກວດກາແຫ່ງລັດ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ສູນກາງຊາວໜຸ່ມ, ສູນກາງກຳມະບານລາວ, ສະຫະພັນນັກຮົບເກົ່າ, ສານປະຊາຊົນພາກໃຕ້, ອົງການໄອຍະການປະຊາຊົນພາກໃຕ້; ບັນດາທ່ານຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນແຂວງຈຳປາສັກ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື ເຂົ້າຮ່ວມ ເຊິ່ງກອງປະຊຸມດັ່ງກ່າວ ໄດ້ຮັບການສະໜັບສະໜູນຈາກແຜນງານເຊກາ (CEGA).

ໂອກາດນີ້, ທ່ານ ສີສູນທອນ ສ.ຜາບມີໄຊຍ໌ ໄດ້ກ່າວເປີດກອງປະຊຸມວ່າ: ກອງປະຊຸມທາບທາມຄວາມເຫັນ ການປັບປຸງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກຢູ່ແຂວງຈຳປາສັກເທື່ອນີ້ ແມ່ນເປັນກອງປະຊຸມຄັ້ງທີ 4 ທີ່ຄະນະຮັບຜິດຊອບໄດ້ດຳເນີນຜ່ານມາ, ກອງປະຊຸມຄັ້ງນີ້ ແມ່ນຈະໄດ້ສຸມໃສ່ຄົ້ນຄວ້າ ແລະ ປຶກສາຫາລືກ່ຽວກັບການປັບປຸງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ໃຫ້ມີຄວາມເປັນເອກະພາບ, ຕໍ່ບາງເນື້ອໃນ ໃຫ້ມີຄວາມຈະແຈ້ງ, ຮັດກຸມ ຖືກຕ້ອງ, ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ ແລະ ແທດເໝາະກັບສະພາບຕົວຈິງ, ຮັບປະກັນ ໃຫ້ການກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ຂອງບັນດາອົງການທີ່ຮັບຜິດຊອບ ໃນການແກ້ໄຂຄຳຮ້ອງທຸກໃຫ້ມີຄວາມສອດຄ່ອງ, ກົມກຽວກັນ ແນ່ໃສ່ເຮັດໃຫ້ການປະຕິບັດລັດຖະທຳມະນູນ ແລະ ກົດໝາຍມີຜົນສັກສິດ, ໂປ່ງໃສ ແລະ ຍຸຕິທຳ.

ໃນກອງປະຊຸມຄັ້ງນີ້ ໄດ້ຮັບຟັງການສະເໜີບົດການປັບປຸງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ໂດຍສະເພາະແມ່ນສະພາບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ໃນໄລຍະຜ່ານມາ, ເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງກົດໝາຍ, ຂະບວນການຄົ້ນຄວ້າປັບປຸງກົດໝາຍ ແລະ ເນື້ອໃນຕົ້ນຕໍຈຳນວນໜຶ່ງ ຂອງຮ່າງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ທີ່ໄດ້ຜ່ານການສັງລວມມາຈາກບັນດາຄຳຄິດ, ຄຳເຫັນ ຂອງກອງປະຊຸມໃນໄລຍະຜ່ານມາ ເພື່ອເປັນພື້ນຖານໃຫ້ແກ່ກອງປະຊຸມ ແລະ ຍັງໄດ້ຄົ້ນຄວ້າເພື່ອເປັນທິດທາງໃນການແລກປ່ຽນຄຳຄິດເຫັນຮ່ວມກັນ ເຊິ່ງລົງເລິກຄົ້ນຄວ້າປັບປຸງຮ່າງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງໃໝ່ນີ້ ປະກອບດ້ວຍ VIII ພາກ, 04 ໝວດ ແລະ 53 ມາດຕາ; ໃນນັ້ນ, ໄດ້ເພີ່ມເຂົ້າໃໝ່ 02 ມາດຕາ (ມາດຕາ 22 ແລະ ມາດຕາ 32), ໄດ້ປັບປຸງຄືນໃໝ່ 34 ມາດຕາ ລວມເປັນທັງໝົດ 36 ມາດຕາ ແລະ ຮັກສາເດີມ 17 ມາດຕາ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ເປັນເຈົ້າການຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມຕໍ່ກັບມາດຕາຕ່າງໆ ແນໃສ່ຮັບປະກັນໃຫ້ເນື້ອໃນການປັບປຸງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ຖືກຕ້ອງຕາມຂັ້ນຕອນ, ຮັດກຸມ, ມີປະສິດທິພາບ ແລະ ປະສິດທິຜົນ ສາມາດນຳໄປຈັດຕັ້ງປະຕິບັດຢ່າງຖືກຕ້ອງຕາມຫລັກວິທະຍາສາດ, ສຳເລັດຕາມແຜນການຂອງຄະນະຮັບຜິດຊອບປັບປຸງກົດໝາຍ ແລະ ກະກຽມຄວາມພ້ອມຮອບດ້ານ ເພື່ອໃຫ້ສາມາດນຳເອົາກົດໝາຍສະບັບດັ່ງກ່າວເຂົ້າຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະມາເຖິງໃນມໍ່ໆນີ້.

(ນາງ ອານິຕາ ມ່ວນສະຫວັດ)

## ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ທອມສະນິດ**

❑ ອີງຕາມຂໍ້ມູນຈາກສູນຂໍ້ມູນຂ່າວສານການຄ້າຂອງ ສປປລາວ ໃຫ້ຮູ້ວ່າ: ມູນຄ່າການນຳເຂົ້າ-ສົ່ງອອກຂອງ ສປປ ລາວ ປະຈຳເດືອນກຸມພາ 2022 ບັນລຸປະມານ 989 ລ້ານໂດລາ; ໃນນັ້ນ, ມູນຄ່າການສົ່ງອອກປະມານ 519 ລ້ານ ໂດລາ, ມູນຄ່າການນຳເຂົ້າມີປະມານ 471 ລ້ານໂດລາ ເຮັດໃຫ້ເກີດດຸນການຄ້າປະມານ 48 ລ້ານໂດລາ.

**ນສພ. ປະຊາຊົນ 06/04/2022**

❑ ຈາກຜົນການສຳຫລວດແຫ່ງຊາດກ່ຽວກັບຢາສູບ ສະແດງໃຫ້ເຫັນວ່າ: ອັດຕາການສູບຢາຂອງຄົນລາວຍັງສືບຕໍ່ເພີ່ມຂຶ້ນຈາກ 25,5% ໃນປີ 2012 ເປັນ 27,9% ໃນປີ 2015 ອີງຕາມການສຶກສາຂອງ UNDP ໃນປີ 2019 ຄິດໄລ່ຄ່າໃຊ້ຈ່າຍທາງກົງ ແລະ ທາງອ້ອມ ໃນການປິ່ນປົວພະຍາດທີ່ເກີດຈາກຢາສູບລະດັບຊາດ ປະມານ 350 ລ້ານໂດລາ ປະມານ 2,3% ຂອງ GDP ດັ່ງນັ້ນ, ຖ້າບໍ່ມີມາດຕະການຄວບຄຸມທີ່ເໝາະສົມຈະເຮັດໃຫ້ພົນລະເມືອງເສຍຊີວິດຈາກການສູບຢາໃນໂລກຈະເພີ່ມຂຶ້ນເປັນ 10 ລ້ານຄົນຕໍ່ປີ ພາຍໃນປີ 2030; ສຳລັບ ສປປລາວ ມີຄົນເສຍຊີວິດຍ້ອນພະຍາດທີ່ເກີດຈາກການສູບຢາ ປະມານ 7.000 ຄົນຕໍ່ປີ ຫລື ປະມານ 19 ຄົນຕໍ່ວັນ.

**ນສພ. ວຽງຈັນໃໝ່ 06/04/2022**

❑ ອີງຕາມບົດລາຍງານການຄາດຄະເນເສດຖະກິດຂອງອາຊີປະຈຳປີ 2022 ທີ່ໄດ້ຖືກນຳມາເຜີຍແຜ່ໃນວັນທີ 06 ເມສາ 2022 ໂດຍທະນາຄານພັດທະນາອາຊີ (ADB) ເສດຖະກິດຂອງລາວຄາດວ່າຈະຂະຫຍາຍຕົວ 3,4% ໃນປີນີ້ ແລະ ປີ 2023 ຄາດວ່າຈະຂະຫຍາຍຕົວລະດັບ 3,7% ຍ້ອນການລົງທຶນຂອງປະເທດທີ່ສົ່ງເສີມການສົ່ງອອກ.

**ນສພ. ວຽງຈັນໃໝ່ 07/04/2022**

❑ ລັດຖະບານ ໄດ້ອອກຂໍ້ຕົກລົງວ່າດວຍການແບ່ງຕົວເລກລັດຖະກອນໃໝ່ ປີ 2022 ສະບັບລົງວັນທີ 17 ມີນາ 2022 ໂດຍເຫັນດີອະນຸມັດແບ່ງຈຳນວນຕົວເລກລັດຖະກອນໃໝ່ (ໂກ້ຕາ) ໃຫ້ບັນດາກະຊວງ, ອົງການຈັດຕັ້ງສູນກາງ ແລະ ທ້ອງຖິ່ນ ໃນປີ 2022 ຈຳນວນ 1.300 ຄົນ ເຊິ່ງລັດຖະກອນໃໝ່ນີ້ໃຫ້ບັນຈຸສຳເລັດກ່ອນວັນທີ 01 ກໍລະກົດ2022; ພ້ອມນີ້, ຍັງບໍ່ອະນຸຍາດໃຫ້ບັນດາກະຊວງ, ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ຮັບເອົາພະນັກງານຕາມສັນຍາ.

**ນສພ. ວຽງຈັນໃໝ່ 08/04/2022**

# ສະຖາບັນການເມືອງແຫ່ງຊາດ ໂຮ່ຈິມິນ ສສ.ຫວຽດນາມ ຢ້ຽມຢາມແລກປ່ຽນ ຖອດຖອນບົດຮຽນກັບ ສພຊ

(ສພຊ) ວັນທີ 5 ເມສາຜ່ານມາ, ທີ່ສະພາແຫ່ງຊາດ ຄະນະຜູ້ແທນວິຊາການໂຄງການກໍ່ສ້າງສະຖາບັນພາກໃຕ້ ຈາກສະຖາບັນການເມືອງແຫ່ງຊາດ ໂຮ່ຈິມິນ ສສ.ຫວຽດນາມ ໄດ້ມາຢ້ຽມຢາມແລກປ່ຽນຖອດຖອນບົດຮຽນໃນການຄຸ້ມຄອງໂຄງການຊ່ວຍເຫລືອລ້າຈາກລັດຖະບານ ສສ.ຫວຽດນາມ ໂຄງການກໍ່ສ້າງຫໍສະພາແຫ່ງຊາດ ໂດຍການຕ້ອນຮັບຂອງສະຫາຍ ປອ. ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະ; ຝ່າຍ ສສ.ຫວຽດນາມ ນໍາໂດຍສະຫາຍ ຮວ່າງ ແອງ ຮວ່າງ ຫົວໜ້າກົມແຜນການ-ການເງິນ ສະຖາບັນການເມືອງແຫ່ງຊາດ ໂຮ່ຈິມິນ ພ້ອມດ້ວຍຄະນະ.

ໂອກາດມາຢ້ຽມຢາມ ແລະ ແລກປ່ຽນບົດຮຽນໃນຄັ້ງນີ້ ຈະເປັນປະໂຫຍດບໍ່ຫລາຍກໍໜ້ອຍໃຫ້ແກ່ການຈັດຕັ້ງປະຕິບັດໂຄງການຂອງສະຖາບັນການເມືອງການປົກຄອງແຫ່ງຊາດໃນຕໍ່ໜ້າ; ພ້ອມກັນນັ້ນ, ກອງປະຊຸມ ຍັງໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດ ໂຄງການປຸກສ້າງຫໍສະພາແຫ່ງຊາດຫລັງໃໝ່, ຮັບຊົມຟິມສາລະຄະດີໂຄງການປຸກສ້າງຫໍສະພາແຫ່ງຊາດ ຫລັງໃໝ່ ແລະ ຕາງໜ້າແມ່ທັບນ້ອຍ 11 ຜູ້ຮັບເໝົາກໍ່ສ້າງຂຶ້ນມີຄໍາເຫັນ; ຈາກນັ້ນ, ທັງສອງຝ່າຍໄດ້ປະກອບຄໍາຄິດຄໍາເຫັນ ພ້ອມທັງແລກປ່ຽນຫົວຂໍ້ອື່ນໆ ທີ່ມີຄວາມສົນໃຈ ກ່ຽວກັບໂຄງການກໍ່ສ້າງຫໍສະພາແຫ່ງຊາດຫລັງໃໝ່; ຫລັງຈາກນັ້ນ ຄະນະດັ່ງກ່າວ ໄດ້ຢ້ຽມຊົມບັນດາຫ້ອງຕ່າງໆຂອງຫໍສະພາແຫ່ງຊາດຫລັງໃໝ່.

(ນາງ ໄຊໂສພາພອນ ມິ່ງມຸງຄຸນ)




# ສໍາເລັດການແນະນໍາການໂຄສະນາເຜີຍແຜ່ ຂໍ້ມູນ-ຂ່າວສານ ຜ່ານແອັບພິເຄຊັນ

(ສພຊ) ໃນລະຫວ່າງວັນທີ 4-8 ເມສາ 2022 ກົມສື່ມວນຊົນ ສະພາແຫ່ງຊາດ ໄດ້ສໍາເລັດການເຄື່ອນໄຫວເຝິກອົບຮົມວຽກງານສື່ມວນຊົນ ໃນຫົວຂໍ້: ຍຸດທະສາດໃໝ່ແຫ່ງການກະຈາຍຂໍ້ມູນ-ຂ່າວສານ ຜ່ານລະບົບແອັບພິເຄຊັນ ໃຫ້ແກ່ພະນັກງານ-ວິຊາການ ທີ່ຮັບຜິດຊອບວຽກງານຂໍ້ມູນ-ຂ່າວສານຂອງສະພາປະຊາຊົນແຂວງ 4 ແຂວງ ຄື: ວຽງຈັນ, ບໍລິຄໍາໄຊ, ຄໍາມ່ວນ, ໄຊສົມບູນ ແລະ ນະຄອນຫລວງວຽງຈັນ ນໍາໂດຍທ່ານ ບຸນເລີດ ລ້ອນດວງຈັນ ຫົວໜ້າກົມສື່ມວນຊົນ ຄະນະເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະ ໂດຍໄດ້ຮັບການຕ້ອນຮັບຈາກບັນດາທ່ານເລຂາທິການ-ຮອງເລຂາທິການສະພາປະຊາຊົນແຂວງ 4 ແຂວງ ແລະ ນະຄອນຫລວງວຽງຈັນ ພ້ອມດ້ວຍຫົວໜ້າ-ຮອງຫົວໜ້າຂະແໜງ, ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອຍົກສູງຄຸນນະພາບຂອງວຽກງານຂໍ້ມູນ-ຂ່າວສານ ໃຫ້ທັນກັບເຫດການ ໃນຍຸກແຫ່ງເຕັກໂນໂລຊີທີ່ທັນສະໄໝ, ໃນຖານະເປັນກະບອກສຽງອັນສໍາຄັນ ເພື່ອໂຄສະນາເຜີຍແຜ່ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະໜອງຂໍ້ມູນ-ຂ່າວສານ ໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ໂດຍຜ່ານລະບົບການເຂົ້າເວັບໄຊ ແລະ ແອັບພິເຄຊັນ ຂອງສະພາແຫ່ງຊາດ ໃຫ້ເຂົ້າເຖິງສັງຄົມກໍຄືປະຊາຊົນຢ່າງທົ່ວເຖິງ.

ໂອກາດດັ່ງກ່າວ, ຄະນະໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການປະຕິບັດວຽກງານການໂຄສະນາເຜີຍແຜ່ຂໍ້ມູນ-ຂ່າວສານ ຂອງແຕ່ລະເຂດເລືອກຕັ້ງ ເຫັນວ່າບັນຫາຂໍ້ຫຍຸ້ງຍາກສ່ວນຫລາຍແມ່ນອຸປະກອນຮັບໃຊ້ໃນວຽກງານສື່ມວນຊົນ ຍັງຂາດເຂີນ, ບຸກຄະລາກອນເຮັດວຽກຫລາຍໜ້າທີ່ ແລະ ອື່ນໆ. ພ້ອມດຽວກັນນີ້, ຄະນະທີມງານຂອງສະພາແຫ່ງຊາດ ກໍໄດ້ແນະນໍາການນໍາໃຊ້ເວັບໄຊ-ແອັບພິເຄຊັນຂອງສະພາແຫ່ງຊາດໂດຍພື້ນຖານ ທັງມີການແລກປ່ຽນບົດຮຽນຮ່ວມກັນຢ່າງກົງໄປກົງມາ ດ້ານວຽກງານສື່ມວນຊົນ ແລະ ການນໍາໃຊ້ເຄື່ອງມືໃນການເຜີຍແຜ່ຂໍ້ມູນ-ຂ່າວສານຕ່າງໆ ເຮັດໃຫ້ທັງສອງຝ່າຍມີຄວາມເຂົ້າໃຈບັນຫາຕ່າງໆໄດ້ລະອຽດ ແລະ ເລິກເຊິ່ງສົມຄວນ.

(ນາງ ປາກາລັກ ພົມມີໄຊ)






## ປອ. ໄຊສົມພອນ...

ຕ່າງໆ ລະຫວ່າງ ສະພາແຫ່ງຊາດ ແລະ ລັດຖະບານ, ຄວາມບຸກບືນຫ້າວຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ, ກົງຈັກເສນາທິການ, ການສະໜັບສະໜູນຂອງພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າ ເຮັດໃຫ້ການເຄື່ອນໄຫວຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດຕາມທີ່ໄດ້ກໍານົດໄວ້ໃນລັດຖະທໍາມະນູນ, ກົດໝາຍ ໄດ້ຮັບຜົນສໍາເລັດຫລາຍດ້ານ ເປັນຕົ້ນ ພວກເຮົາໄດ້ເຮັດສໍາເລັດໜ້າທີ່ການເມືອງອັນສໍາຄັນໃນການດໍາເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ IX ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງຊຸດທີ II ເຊິ່ງໄດ້ສ້າງເງື່ອນໄຂໃຫ້ປະຊາຊົນລາວບັນດາເຜົ່າ ໄດ້ໃຊ້ສິດປະຊາທິປະໄຕ ເລືອກຕັ້ງເອົາຕົວແທນຂອງຕົນ ເພື່ອປະຕິບັດໜ້າທີ່ພິຈາລະນາບັນຫາສໍາຄັນພື້ນຖານຂອງປະເທດຊາດ ຢູ່ສະພາແຫ່ງຊາດ ກໍຄື ສະພາປະຊາຊົນແຂວງ, ນະຄອນຫລວງ; ໄດ້ສໍາເລັດການດໍາເນີນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ເພື່ອພິຈາລະນາຮັບຮອງເອົາບັນຫາສໍາຄັນພື້ນຖານຂອງປະເທດຊາດ ໂດຍສະເພາະ ການເລືອກຕັ້ງ ແລະ ການຮັບຮອງເອົາການແຕ່ງຕັ້ງ ບຸກຄະລາກອນໃນຕໍາແໜ່ງສໍາຄັນຂອງລັດ, ຮັບຮອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ວຽກງານສໍາຄັນອື່ນ ຕາມລັດຖະທໍາມະນູນ, ກົດໝາຍກໍານົດ; ການດໍາເນີນກອງປະຊຸມສະໄໝວິສາມັນ ເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອພິຈາລະນາຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການແກ້ໄຂບັນຫາຢາເສບຕິດ; ການດໍາເນີນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອພິຈາລະນາຮັບຮອງເອົາບັນຫາສໍາຄັນພື້ນຖານຂອງປະເທດຊາດ ໂດຍສະເພາະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປະຈໍາປີ 2021 ແລະ ແຜນການປະຈໍາປີ 2022 ແລະ ວຽກງານສໍາຄັນອື່ນ. ຜົນສໍາເລັດໃນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ຕະລອດໄລຍະ 1 ປີທີ່ຜ່ານມາ ເຊິ່ງເນື້ອແທ້ມັນແມ່ນ ຄວາມພະຍາຍາມ, ຄວາມບຸກບືນສູ້ຊົນ ໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ເຂົ້າໃນການຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດໃຫ້ນັບມື້ມີປະສິດທິຜົນສູງຂຶ້ນ, ນໍາເອົາຜົນປະໂຫຍດຕົວຈິງມາສູ່ປະເທດຊາດ ກໍຄື ປັບປຸງຊີວິດການເປັນຢູ່ຂອງພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃຫ້ນັບມື້ດີຂຶ້ນ.

ພໍ່ແມ່ພີ່ນ້ອງ ປະຊາຊົນລາວບັນດາເຜົ່າ ທີ່ຮັກແພງທັງຫລາຍ.

ປີ ພສ. 2565 ທີ່ກໍາລັງກ້າວເຂົ້າມານີ້ ເປັນປີທີ່ມີຄວາມໝາຍສໍາຄັນຫລາຍ ສໍາລັບປະເທດເຮົາ ເຊິ່ງເປັນປີທີ 2 ຂອງການຈັດຕັ້ງປະຕິບັດເນື້ອໃນຈິດໃຈ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ເຂົ້າໃນທຸກຂົງເຂດວຽກງານ ໃຫ້ມີການຫັນປ່ຽນຢ່າງຕັ້ງໜ້າ ແລະ ມີປະສິດທິຜົນ. ສໍາລັບສະພາແຫ່ງຊາດ ກໍຈະໄດ້ສຸມໃສ່ຍົກສູງບົດບາດ, ຄຸນນະພາບ ແລະ ຄວາມສາມາດ ໃນການສ້າງ ແລະ ປັບປຸງກົດໝາຍ ໃຫ້ເປັນລະບົບຄົບຊຸດ ເພື່ອເປັນບ່ອນອີງທີ່ໜັກແໜ້ນໃຫ້ແກ່ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ; ການພິຈາລະນາບັນຫາສໍາຄັນພື້ນຖານຂອງປະເທດຊາດ ໃຫ້ຮັບປະກັນຄວາມສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ນໍາຜົນປະໂຫຍດມາສູ່ປະເທດຊາດ ກໍຄື ປະຊາຊົນລາວບັນດາເຜົ່າຢ່າງແທ້ຈິງ; ເພີ່ມທະວີການຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດລັດຖະທໍາມະນູນ ແລະ ກົດໝາຍ ຂອງບັນດາອົງການລັດຂັ້ນຕ່າງໆ ແນໃສ່ສ້າງສະຕິກົດໝາຍໃຫ້ແກ່ສັງຄົມນັບມື້ສູງຂຶ້ນ, ຜົນຂອງການຕິດຕາມກວດກາ ຕ້ອງໄດ້ຮັບການພິຈາລະນາແກ້ໄຂຈາກອົງການລັດທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ, ທັນເວລາ; ເພີ່ມທະວີການລົງພົບປະກັບພໍ່ແມ່ປະຊາຊົນບັນດາເຜົ່າໃຫ້ກວ້າງຂວາງ ແລະ ທົ່ວເຖິງ, ສ້າງເງື່ອນໄຂອໍານວຍຄວາມສະດວກ ໃຫ້ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ໄດ້ພົບປະໃກ້ຊິດກັບ ພໍ່ແມ່ປະຊາຊົນ ຜູ້ມີສິດເລືອກຕັ້ງດ້ວຍວິທີການຕ່າງໆທີ່ເໝາະສົມ ທັງນັ້ນກໍເພື່ອຮັບຟັງຄວາມຄິດຄວາມເຫັນ, ຄວາມມຸ້ງມາດປາຖະໜາຂອງ ພໍ່ແມ່ປະຊາຊົນບັນດາເຜົ່າ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງຄົ້ນຄວ້າແກ້ໄຂ ຕໍ່ບັນຫາຕ່າງໆທີ່ພົວພັນກັບການດໍາລົງຊີວິດຂອງປະຊາຊົນ. ພ້ອມກັນນັ້ນ ກໍເພື່ອເຜີຍແຜ່ຜົນສໍາເລັດຂອງກອງປະຊຸມສະພາແຫ່ງຊາດໃນແຕ່ລະຄັ້ງ ກໍ່ຄືກອງປະຊຸມສະພາປະຊາຊົນແຂວງ ໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້, ເຂົ້າໃຈ, ທັງສຶກສາອົບຮົມພໍ່ແມ່ ພີ່ນ້ອງ ຜູ້ມີສິດເລືອກຕັ້ງ ປະກອບສ່ວນ ຫ້າວຫັນເຂົ້າໃນວຽກງານ ພັດທະນາທ້ອງຖິ່ນ ປະຕິບັດພັນທະຂອງພົນລະເມືອງອີກດ້ວຍ

ເພື່ອເຮັດສໍາເລັດໜ້າທີ່ວຽກງານທີ່ສໍາຄັນດັ່ງກ່າວ ຮຽກຮ້ອງໃຫ້ພະນັກງານ, ທະຫານ, ຕໍາຫລວດ ກໍຄື ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າ ຈະຕ້ອງໄດ້ພ້ອມພຽງຮຽງໜ້າເປັນຈິດໜຶ່ງໃຈດຽວ ພ້ອມກັບ ພັກ-ລັດ ກໍຄື ສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລັດຖະທໍາມະນູນ, ກົດ ໝາຍ, ມະຕິກອງປະຊຸມສະແຫ່ງຊາດ ທີ່ວາງອອກໃນແຕ່ລະໄລຍະ ຢ່າງເຂັ້ມງວດ; ເປັນເຈົ້າການປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ບັນລຸຜົນສໍາເລັດຕາມແຜນການທີ່ວາງໄວ້; ສ້າງການຫັນປ່ຽນໃໝ່ ໃນວິຖີການດໍາລົງຊີວິດ ແລະ ທໍາມາຫາກິນແບບໃໝ່ໃນເງື່ອນໄຂຂອງການແຜ່ລະບາດ ຂອງພະຍາດໂຄວິດ-19 ດ້ວຍການນໍາໃຊ້ຄວາມກ້າວໜ້າຂອງເຕັກໂນໂລຊີ ແລະ ນໍາໃຊ້ທ່າແຮງທາງດ້ານຊັບພະຍາກອນທໍາມະຊາດເຂົ້າໃນການຜະລິດກະສິກໍາເປັນສິນຄ້າ, ສ້າງວຽກເຮັດງານທໍາ, ສ້າງລາຍຮັບໃຫ້ແກ່ຄອບຄົວ ຈະເຮັດໃຫ້ຊີວິດການເປັນຢູ່ໄດ້ຮັບການຍົກລະດັບດີຂຶ້ນ; ເປັນເຈົ້າການເຂົ້າຮ່ວມໃນການແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມເຮົາ ໃຫ້ກາຍເປັນສັງຄົມທີ່ປອດໃສ, ມີລະບຽບວິໄນ.

ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າ ທີ່ຮັກແພງທັງຫລາຍ.

ກ້າວເຂົ້າສູ່ປີໃໝ່ ພ.ສ 2565 ນີ້, ຂໍຖືໂອກາດທີ່ເປັນສິລິມຸງຄຸນ ແລະ ລຶກງາມຍາມດີນີ້, ຂ້າພະເຈົ້າ ຮຽກຮ້ອງມາຍັງພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າ ຈົ່ງເພີ່ມທະວີນໍ້າໃຈຮັກຊາດ, ຮັກບ້ານເກີດເມືອງນອນ ຊຶ່ງມໍລະດົກຕົກທອດຈາກປູ່ຍ່າຕາຍາຍ, ບັນດາບັນພະບູລຸດຂອງຊາດເຮົາແຕ່ລະຍຸກ ແຕ່ລະສະໄໝ ໄດ້ນໍາພາຕໍ່ສູ້ກູ້ຊາດ, ປົກປັກຮັກສາ ແລະ ສ້າງສາພັດທະນາດິນແດນທີ່ອຸດົມຮັ່ງມີ ດ້ວຍອະລິຍະທໍາຕ່າງໆແຫ່ງນີ້ ຈົນມາຮອດຍຸກສະໄໝຂອງພວກເຮົາ ເຊິ່ງເປັນລູກຫລານຂອງວິງເຊື້ອຄະນາຍາດລາວ ຈົ່ງສືບຕໍ່ ແລະ ສານຕໍ່ອຸດົມການທີ່ບັນພະບູລຸດປະໄວ້ນັ້ນໃຫ້ຈະເລີນຮຸ່ງເຮືອງ; ເພີ່ມທະວີຄວາມສາມັກຄີອັນເປັນປຶກແຜ່ນແໜ້ນໜາ, ພ້ອມກັນຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍທົດສອບນາໆປະການ ເພື່ອພ້ອມພາກັນສ້າງສາພັດທະນາປະເທດເຮົາ ໃຫ້ຈະເລີນກ້າວໜ້າຂຶ້ນໄປຢ່າງບໍ່ຢຸດຢັ້ງ.

ທ້າຍສຸດນີ້, ຂໍອວຍພອນປີໃໝ່ ພ.ສ 2565 ນີ້, ຈົ່ງເປັນປີທີ່ປວງຊົນລາວບັນດາເຜົ່າ ຈົ່ງຍາດໄດ້ຜົນສໍາເລັດໃນການສ້າງສາພັດທະນາເສດຖະກິດ-ສັງຄົມ, ເປັນປີທີ່ນໍາເອົາຄວາມຢູ່ເຢັນເປັນສຸກມາສູ່ພໍ່ແມ່ປະຊາຊົນລາວບັນດາເຜົ່າ !

ສະບາຍດີປີໃໝ່!

(ຂໍຂອບໃຈ)

# ສພຂ ອຸດົມໄຊ ເຜີຍແຜ່ເອກະສານສຳຄັນຕ່າງໆ ແລະ ມອບໃບຍ້ອງຍໍຜົນງານ ປະຈຳປີ 2021



(ສພຊ) ຕອນເຊົ້າຂອງວັນພະຫັດທີ 7 ເມສາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ຈັດກອງປະຊຸມເຜີຍແຜ່ເອກະສານສຳຄັນຈຳນວນໜຶ່ງ ແລະ ມອບໃບຍ້ອງຍໍຜົນງານ ປະຈຳປີ 2021 ໃຫ້ພະນັກງານ-ລັດຖະກອນພາຍໃນ ສພຂ ອຸດົມໄຊ ໂດຍການເປັນປະທານຂອງທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານ ສພຂ; ເຂົ້າຮ່ວມມີທ່ານ ນາງ ຄຳພອນ ພົມມະຈັນ ຮອງປະທານ ສພຂ, ມີບັນດາຄະນະປະຈຳ, ຄະນະເລຂາທິການ ແລະ ພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ບັນດາເອກະສານທີ່ນຳມາເຜີຍແຜ່ຄັ້ງນີ້ ປະກອບມີຂໍ້ກຳນົດຊົ່ວຄາວ ສະບັບເລກທີ 234/ຄປຈ, ລົງວັນທີ 28 ມີນາ 2022 ວ່າດ້ວຍລະບຽບ ແລະ ການປະຕິບັດນະໂຍບາຍພາຍໃນ ສພຂ (ສະບັບປັບປຸງ); ແຈ້ງການຂອງພະແນກພາຍໃນແຂວງ ສະບັບເລກທີ 212/ພຂ, ລົງວັນທີ 28 ມີນາ 2022 ເລື່ອງປະເມີນຜົນການຈັດຕັ້ງປະຕິບັດວຽກງານ ຂອງພະນັກງານ-ລັດຖະກອນ ປະຈຳປີ; ແຈ້ງການເລກທີ 322/ຫອຂ, ລົງວັນທີ 4/4/2022 ກ່ຽວກັບການສະເຫລີມສະຫລອງບຸນປີໃໝ່ລາວ ປີ ພສ. 2565 (ຄສ 2022) ແລະ ຄຳສັ່ງເລກທີ 307/ອຊ, ລົງວັນທີ 6 ເມສາ 2022 ວ່າດ້ວຍການຮັກສາຄວາມເປັນລະບຽບຮຽບຮ້ອຍໃນໄລຍະສະຫລອງບຸນປີໃໝ່ລາວ ປີ ພສ. 2565 (ຄສ 2022) ຢູ່ແຂວງອຸດົມໄຊ ສະເໜີໂດຍທ່ານ ນາງ ວັນສີ ພວງມະໄລ ເລຂາທິການ ສພຂ.

ພ້ອມກັນນັ້ນ, ຄະນະຮັບຜິດຊອບວຽກງານປ້ອງກັນພາຍໃນ ສພຂ ໄດ້ຜ່ານແຜນ ແລະ ຕາຕະລາງເວນຍາມໃນໄລຍະພັກປີໃໝ່ລາວ ທີ່ຈະມາເຖິງນີ້ ເພື່ອເປັນການຮັກຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍພາຍໃນ ສພຂ ອຸດົມໄຊ.

ຫລັງຈາກນັ້ນ, ຄະນະຮັບຜິດຊອບວຽກງານຍ້ອງຍໍໄດ້ຜ່ານຂໍ້ຕົກລົງຂອງເຈົ້າແຂວງ, ສະບັບເລກທີ 158/ອຊ, ລົງວັນທີ 1/3/2022 ວ່າດ້ວຍການຍ້ອງຍໍ ແລະ ຊົມເຊີຍພະນັກງານ-ລັດຖະກອນ ສພຂ ທີ່ມີຜົນງານດີເດັ່ນປະຈຳປີ2021, ໃນນີ້ ມີໃບຍ້ອງຍໍ້ 35 ໃບ ແລະ ໃບຊົມເຊີຍ 3 ໃບ ໃຫ້ບຸກຄົນທີ່ມີຜົນງານດີເດັ່ນ ແລະ ດີ ໃນການເຄື່ອນ ໄຫວ ແລະ ຈັດຕັ້ງປະຕິບັດໜ້າທີ່ວຽກງານຕະຫລອດໄລຍະໜຶ່ງປີ 2021 ຜ່ານມາ ພ້ອມທັງຈັດພິທີມອບຢ່າງເປັນທາງການ.

ຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ເນັ້ນໜັກໃຫ້ພະນັກງານ-ລັດຖະກອນ ຮັກສາມູນເຊື້ອອັນດີງາມໃນການຈັດຕັ້ງປະຕິບັດວຽກງານ, ເພີ່ມທະວີການສຶກສາອົບຮົມດ້ານການເມືອງແນວຄິດ, ເປັນເຈົ້າການໃນການຈັດຕັ້ງປະຕິບັດບັນດາແຈ້ງການ ແລະ ຄຳສັ່ງຕ່າງໆ, ມີສະຕິເຄົາລົບລະບຽບການ ແລະ ບັນດາມາດຕະການຄວາມຄຸ້ມ-ປ້ອງກັນພະຍາດໂຄວິດ-19 ແລະ ສະເຫລີມສະຫລອງບຸນປີລາວ ຢ່າງລະມັດລະວັງ ເພື່ອບໍ່ກໍ່ໃຫ້ເກີດຄວາມເສັຍຫາຍຕ່າງໆ ຕໍ່ຕົນເອງ, ຄອບຄົວ ແລະ ຕໍ່ສັງຄົມ.

(ແສງພອນ ອິນນະລົງ)

# ເລຂາຊາວໜຸ່ມສະພາປະຊາຊົນແຂວງບໍ່ແກ້ວ ໂອ້ລົມຕໍ່ສະມາຊິກພາຍໃນໜ່ວຍ

(ສພຊ) ໃນວາລະທີ່ສະຫາຍ ອານຸສອນ ສີລະວັນຕາ ເລຂາໜ່ວຍຊາວໜຸ່ມສະພາປະຊາຊົນແຂວງ (ສພຂ) ບໍ່ແກ້ວ ໄດ້ເຂົ້າຮ່ວມເປັນປະທານກອງປະຊຸມໃນກອງປະຊຸມປະຈຳເດືອນຂອງໜ່ວຍຊາວໜຸ່ມ ສພຂ ເມື່ອຕອນເຊົ້າຂອງວັນທີ 7 ເມສາ 2020 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ ສພຂ ບໍ່ແກ້ວ, ສະຫາຍໄດ້ໂອ້ລົມ ແລະ ຊີ້ນຳຕໍ່ສະມາຊິກພາຍໃນໜ່ວຍ ໂດຍມີບັນດາຄະນະໜ່ວຍຊາວໜຸ່ມ ແລະ ສະມາຊິກຊາວໜຸ່ມເຂົ້າຮ່ວມທັງໝົດ 21 ສະຫາຍ ຍິງ 9 ສະຫາຍ.

ສະຫາຍ ອານຸສອນ ສີລະວັນຕາ ໄດ້ໃຫ້ທິດຊີ້ນຳ ແລະ ຮຽກຮ້ອງໃຫ້ສະມາຊິກຊາວໜຸ່ມທຸກສະຫາຍ ຈົ່ງມີແນວຄິດອຸ່ນອ່ຽງທຸນທ່ຽງມີຄວາມເຊື່ອໝັ້ນຕໍ່ແນວທາງນະໂຍບາຍຂອງພັກ-ລັດ ແລະ ຕໍ່ການຊີ້ນຳ-ນຳພາຂອງຄະນະພັກ, ຄະນະນຳແຕ່ລະຂັ້ນພາຍໃນສະພາປະຊາຊົນແຂວງ ຕໍ່ກັບການແກ້ໄຂບໍລິຫານວຽກງານອີກ



ດ້ານໜຶ່ງ ໃຫ້ເພີ່ມທະວີຄວາມເປັນເຈົ້າການໃນການປະຕິບັດກົດລະບຽບຂອງພະນັກງານ-ລັດຖະກອນ, ເອົາໃຈໃສ່ເພີ່ມທະວີປະກອບສ່ວນເຂົ້າຮ່ວມຂະບວນການດ້ານຕ່າງໆ ພ້ອມທັງຮັກສາມູນເຊື້ອຄວາມດຸໝັ່ນ, ຄວາມສາມັກຄີ ທັງເປັນກຳລັງປະຈັນບານໃຫ້ແກ່ຄະນະພັກ.

ກອງປະຊຸມຄັ້ງນີ້ ບັນດາສະຫາຍທີ່ເຂົ້າຮ່ວມໄດ້ຮັບຟັງການຜ່ານບົດສະຫລຸບການຈັດຕັ້ງປະຕິບັດວຽກງານປະຈຳເດືອນ 4 ແລະ ວາງທິດທາງແຜນການປະຈຳເດືອນ 5 ປີ 2022 ຂອງໜ່ວຊາວໜຸ່ມສະພາປະຊາຊົນແຂວງບໍ່ແກ້ວ. ພ້ອມດຽວກັນນັ້ນ, ກໍຮັບຟັງການລາຍງານດ້ານການໝູນໃຊ້ງົບປະມານ ໃນໄລຍະ 1 ເດືອນຜ່ານມາ. ພ້ອມນັ້ນ, ໃນກອງປະຊຸມສະມາຊິກແຕ່ລະສະຫາຍຍັງໄດ້ປະກອບຄຳເຫັນໃສ່ຮ່າງບົດສະຫລຸບ ແລະ ແລກປ່ຽນຄຳເຫັນເຊິ່ງກັນແລະກັນອີກດ້ວຍ.

(ນາງ ຂັນຖະໜອມ ແກ້ວມະນີ)

# ເຊກອງ ທາບທາມຄຳເຫັນໃສ່ຮ່າງນິຕິກຳວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ-ສັງຄົມສົງເຄາະ ແລະ ວ່າດ້ວຍການຄຸ້ມຄອງ-ບໍລິຫານຕົວເມືອງ




(ສພຊ) ຕອນເຊົ້າຂອງວັນທີ 1 ເມສາຜ່ານມາ, ທີ່ສະໂມສອນຫ້ອງວ່າການເມືອງລະມາມ ແຂວງເຊກອງ ໄດ້ມີກອງປະຊຸມທາບທາມຄຳເຫັນໃສ່ຮ່າງຂໍ້ຕົກລົງວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ-ສັງຄົມສົງເຄາະ ແລະ ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ-ບໍລິຫານຕົວເມືອງ ທີ່ສະໂມສອນວ່າການປົກຄອງເມືອງດັ່ງກ່າວ ເຂົ້າຮ່ວມໂດຍທ່ານ ໃຈເຜັດ ພັນທະວົງ ສະມາຊິກສະພາປະຊາຊົນແຂວງ, ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ມີສະມາຊິກສະພາປະຊາຊົນແຂວງ, ຄະນະພະແນກການທີ່ກ່ຽວຂ້ອງ, ບັນດາຫ້ອງການອ້ອມຂ້າງເມືອງ, ອຳນາດການປົກຄອງ 8 ບ້ານເທສະບານ ພ້ອມດ້ວຍລັດວິສາຫະກິດ-ນັກທຸລະກິດເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ກໍເພື່ອກຳນົດຫລັກການ, ລະບຽບ ແລະ ມາດຕະການກ່ຽວກັບຄຸ້ມຄອງ-ການນຳໃຊ້ກອງທຶນໄພພິບັດ ແລະ ສັງຄົມສົງເຄາະ ເພື່ອລະດົມທຶນຈາກບຸກຄົນ, ນິຕິບຸກຄົນ, ຄອບຄົວ, ອົງການຈັດຕັ້ງພັກ-ລັດ ແລະ ສາກົນຕ່າງໆທັງພາຍໃນ-ຕ່າງປະເທດ ປະກອບສວນເຂົ້າໃນກອງທຶນສະສົມທຶນໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງເພື່ອຊ່ວຍເຫລືອບັນເທົາທຸກຜູ້ປະສົບໄພພິບັດ ຜູ້ທຸກຍາກ ແລະ ດ້ອຍໂອກາດໃນສັງຄົມຢ່າງທົ່ວເຖິງ ພ້ອມນັ້ນ, ຍັງເພື່ອກຳນົດຫລັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ແລະ ການບໍລິຫານໃຫ້ມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ມີການພັດທະນາສູງ, ຮັບປະກັນການມີສ່ວນຮ່ວມຂອງຊຸມຊົນ ເຮັດໃຫ້ມີຄວາມສະອາດ, ສວຍງາມ, ສີຂຽວສະຫວ່າງ, ສະດວກ, ວ່ອງໄວ, ໜ້າຢູ່ ແລະ ຍືນຍົງ, ດຶງດູດການລົງທຶນການທ່ອງທ່ຽວ, ການພັດທະນາເສດຖະກິດ-ສັງຄົມຂອງແຂວງໃຫ້ດີຂຶ້ນດັ່ງນັ້ນ, ຈຶ່ງຈຳເປັນຕ້ອງໄດ້ມີການຈັດກອງປະຊຸມທາບທາມຄຳຄິດເຫັນໃສ່ຮ່າງນິຕິກຳດັ່ງກ່າວ ເພື່ອຄວາມເປັນເອກະພາບໃນທຸກພາກສ່ວນ.

ໃນທີ່ປະຊຸມ, ຜູ້ເຂົ້າຮ່ວມໄດ້ປະກອບຄຳເຫັນໃສ່ຮ່າງນິຕິກຳທັງ 2 ສະບັບຢ່າງມີຈຸດສຸມ, ຖືກຕ້ອງ ແລະ ສອດຄ່ອງເຮັດໃຫ້ເນື້ອໃນມີຄວາມຄົບຖ້ວນ ແລະ ສົມເຫດສົມຜົນ. ຈາກນັ້ນ, ທ່ານ ໃຈເຜັດ ພັນທະວົງ ໄດ້ສະຫລຸບການປະກອບຄຳຄິດຄຳເຫັນຂອງບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ແລະ ໃຫ້ຮູ້ວ່າ ຈະນຳເອົາທຸກຄວາມຄິດເຫັນຂອງບັນດາທ່ານໃນກອງປະຊຸມຄັ້ງນີ້ ໄປພິຈາລະນາ, ຄົ້ນຄວ້າ, ປັບປຸງເພື່ອໃຫ້ນິຕິກຳໃຫ້ສອດຄ່ອງກັບຄວາມເປັນຈິງ, ສອດຄ່ອງກັບການພັດທະນາ ແລະ ສອດຄ່ອງກັບການດຳລົງຊີວິດຂອງພໍ່ແມ່ປະຊາຊົນໃນທົ່ວແຂວງ ເພື່ອຈັດຕັ້ງປະຕິບັດໃນທົ່ວສັງຄົມໃນວາລະຕໍ່ໄປ.

(ຕະບະ ໄຊຍະລາດ)

# ປະທານ ສພຂ ສາລະວັນ ທວນຄືນມູນເຊື້ອ ວັນສ້າງຕັ້ງ ຄຊປປລ ຄົບຮອບ 67 ປີ



(ສພຊ) ວັນທີ 6 ເມສານີ້ ຢູ່ທີ່ສະໂມສອນຊາວໜຸ່ມແຂວງສາລະວັນ, ສະຫາຍ ສີເຮັງ ຫອມສົມບັດ ຮອງເລຂາພັກ, ປະທານສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ປາຖະກະຖາວັນສ້າງຕັ້ງຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວ (ຄຊປປລ) ຄົບຮອບ 67 ປີ (14 ເມສາ 1955-14 ເມສາ 2022) ແລະ ຕິດພັນກັບການບໍລິຈາກເລືອດແບບສະໝັກໃຈ; ເຂົ້າຮ່ວມມີສະຫາຍ ສຸວຽງທອງ ສຸຂະວົງ ຮອງເລຂາຄະນະຊາວໜຸ່ມແຂວງ, ມີເລຂາຊາວໜຸ່ມຮາກຖານ ພ້ອມດ້ວຍສະມາຊິກຊາວໜຸ່ມອ້ອມຂ້າງແຂວງ ຕະຫລອດຮອດນ້ອງນ້ອຍເຍົາວະຊົນ.

ສະຫາຍ ສີເຮັງ ຫອມສົມບັດ ໄດ້ຍົກໃຫ້ເຫັນປະຫວັດແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງຄະນະຊາວໜຸ່ມປະຊາຊົນ ປະຕິວັດລາວ ຕະຫລອດໄລຍະ 67 ປີ ເຊິ່ງຊາດລາວເຮົາມີມູນເຊື້ອທີ່ອົງອາດກ້າຫານມີປະຫວັດສາດອັນຍາວນານໃນການເຕົ້າໂຮມຄວາມສາມັກຄີ ແລະ ປົກປັກຮັກສາປະເທດຊາດທີ່ສືບທອດມາແຕ່ດຶກດຳບັນ, ພັກຄອມມູນິດອິນດູຈີນ ໄດ້ມີການສ້າງຕັ້ງຂຶ້ນໃນວັນທີ 3 ກຸມພາ 1930 ໄດ້ຂົນຂວາຍມະຫາຊົນ ແລະ ສ້າງໄດ້ສະມາຊິກຊາວໜຸ່ມກອມມູນິດ 25 ຄົນ ແລະ ສະມາຊິກຊາວໜຸ່ມນັກຮຽນ20 ຄົນ, ຄຽງຄູ່ກັນນັ້ນ ຂະບວນການຕໍ່ສູ້ຕ້ານຈັກກະພັດໃນແຕ່ລະໄລຍະ ໄດ້ມີກຳລັງສູ້ຮົບຂອງກອງເຈົ້າໄຊຈັກກະພັດ, ກອງເຈົ້າຟ້າປັດໄຈ, ກອງລາດຊະວົງ ແລະ ອື່ນໆ, ນັ້ນແມ່ນຊາວໜຸ່ມມາຈາກກຳລັງປະກອບອາວຸດເອີ້ນວ່າ ຄະນະຊາວໜຸ່ມຕະລຸມບອນ ເຊິ່ງໄດ້ມີບົດບາດຕະລຸມບອນ ບໍ່ວ່າແນວໜ້າ ຫລືແນວຫລັງ ກໍ່ລ້ວນມີກຳລັງຂອງຊາວໜຸ່ມ, ພາຍຫລັງໄດ້ດຳເນີນກອງປະຊຸມໃຫຍ່ ຄັ້ງທີ 1 ໄດ້ກຳນົດເອົາວັນທີ 14 ເມສາ 1955 ເປັນວັນສ້າງຕັ້ງ ຄຊປປລ.

ໂອກາດດັ່ງກ່າວ, ສະຫາຍ ສີເຮັງ ຫອມສົມບັດ ຍັງໄດ້ເນັ້ນໃຫ້ສະມາຊິກຊາວໜຸ່ມຈົ່ງຮັກສາມູນເຊື້ອອັນດີງາມໃຫ້ຄົງຢູ່ຕະຫລອດໄປ, ພ້ອມກັນຫລີກຫ່າງຈາກສິ່ງເສບຕິດທຸກໆຢ່າງ ເພື່ອຜັນຂະຫຍາຍຕາມວາລະແຫ່ງຊາດ ທີ່ໄດ້ກຳນົດໄວ້ໃຫ້ເປັນຮູບປະທຳ, ສືບຕໍ່ຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກຂອງຊາວໜຸ່ມ ຄື: ບຸກດ້ານແນວຄິດ, ບຸກດ້ານການຝຶກຝົນຫລໍ່ຫລອມຮ່ຳຮຽນ, ບຸກດ້ານວຽກງານການຈັດຕັ້ງ ແລະ ບຸກດ້ານວິຊາຊີບ-ສ້າງວຽກເຮັດງານທຳ.

ໃນພິທີດັ່ງກ່າວ, ຍັງໄດ້ມີການຈັດຈຸດຮັບບໍລິຈາກເລືອດແບບສະໝັກໃຈ ຈາກຜູ້ເຂົ້າຮ່ວມກໍຄືສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ອ້ອມຂ້າງແຂວງມີບັນຍາກາດຂະບວນຄຶກຄື້ນ.

(ດີລຳພົນ ພົມມະຈັນ)

# ຫາລືວຽກງານຮອບດ້ານ ຂອງຄະນະເລຂາທິການ ສພຂ ຊຽງຂວາງ



(ສພຊ) ໃນວັນທີ 31 ມີນາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ເປີດກອງປະຊຸມປຶກສາຫາລືວຽກງານຮອບດ້ານຂອງຄະນະເລຂາທິການສະພາປະຊາຊົນແຂວງ ໂດຍການເປັນທານຂອງທ່ານ ນາງ ສາຍພູເງິນ ອຸດົມສຸກ ເລຂາທິການສະພາປະຊາຊົນແຂວງ, ມີຄະເລຂາທິການ ສພຂ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານສະພາປະຊາຊົນແຂວງເຂົ້າຮ່ວມ.

ເພື່ອເປັນສະຫລຸບວຽກງານຮອບດ້ານທີ່ສາມາດຈັດຕັ້ງປະຕິບັດໄດ້ໃນໄລຍະຜ່ານມາ ແລະ ປຶກສາຫາລືວຽກງານແຜນການໃນຕໍ່ໜ້າຂອງຄະນະເລຂາທິການ ສພຂ, ໃນທີ່ປະຊຸມທ່ານ ຄຳແພງ ວົງພະເດັດ ໄດ້ຂຶ້ນຜ່ານບົດສະຫລຸບການຈັດຕັ້ງປະຕິບັດວຽກງານຂອງຄະນະເລຂາທິການ ສພຂ ຊຽງຂວາງ ປະຈຳ 3 ເດືອນ 1.2.3 ປີ 2022 ແລະ ທິດທາງແຜນການປະຈຳ 3 ເດືອນ 4.5.6 ປີ 2022 ເຊິ່ງໃນໄລຍຜ່ານມາຄະນະເລຂາທິການເອົາໃຈໃສ່ການຈັດຕັ້ງປະຕິບັດວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ພະນັກງານ-ລັດຖະກອນດ້ວຍຫລາຍຮູບການເປັນຕົ້ນແມ່ນໄດ້ເຊື່ອມຊຶມດາເອກະສານທີ່ສຳຄັນຂອງພັກ-ຂອງຊາດ, ຕັ້ງໜ້າປະຕິບັດໜ້າທີ່ວຽກງານຂອງຕົນດ້ວຍຄວາມຮັບຜິດຊອບສູງ ໂດຍສະເພາະແມ່ນໄດ້ກະກຽມບັນດາເນື້ອໃນເອກະສານຕ່າງໆ, ອຳນວຍຄວາມສະດວກດ້ານງົບປະມານ, ພາຫະນະ ແລະ ວັດຖຸອຸປະກອນຕ່າງໆ ໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຄະນະກຳມະການຂອງສະພາປະຊາຊົນແຂວງ ເພື່ອໃນການເຄື່ອນໄຫວວຽກງານຂອງຕົນ. ນອກນັ້ນ, ຍັງປະສານສົມທົບກັບສະພາແຫ່ງຊາດ, ບັນດາພະແນກການ, ກົມກອງອ້ອມຂ້າງແຂວງ ໃນການຈັດຕັ້ງປະຕິບັດວຽກງານ; ທິດທາງແຜນການໃນຕໍ່ໜ້າ ຄະນະເລຂາທິການ ສພຂ ຍັງຈະໄດ້ສືບຕໍ່ສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານ-ລັດຖະກອນດ້ວຍຫລາຍຮູບແບບ ແລະ ເປັນປົກກະຕິ ເປັນຕົ້ນແມ່ນຈັດແບ່ງເຂົ້າຮ່ວມ ແລະ ຈັດຕັ້ງການເຊື່ອມຊຶມບັນດາແນວທາງນະໂຍບາຍຕ່າງໆຂອງພັກ ແລະ ລັດວາງອອກ, ການຈັດປາຖະກະຖາເລົ່າມູນເຊື້ອວັນສຳຄັນຂອງພັກ-ຂອງຊາດ, ສືບຕໍ່ເປັນເສນາທິການໃຫ້ດ້ານຕ່າງໆແກ່ ສພຂ ໂດຍສະເພາະສະໜອງຂໍ້ມູນ, ເປັນໃຈການປະສານງານກັບພາກສ່ວນຕ່າງໆ, ອຳນວຍຄວາມສະດວກດ້ານພາຫະນະ ແລະ ງົບປະມານ ໃນການເຄື່ອນໄຫວວຽກງານຂອງ ສພຂ ພ້ອມທັງສືບຕໍ່ເຂົ້າຮ່ວມຂະບວນການອອກແຮງງານອະນາໄມສະຖານທີ່ ແລະ ຂະບວນການກິລາຕ່າງໆຕາມການແຈ້ງເຊີນ ເພື່ອຂໍ່ານັບຮັບຕ້ອນວັນສຳຄັນຂອງພັກ-ຂອງຊາດ. ນອກຈາກນັ້ນ, ໃນທີ່ປະຊຸມບັນດາຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ປະກອບຄຳຄິດ, ຄຳເຫັນໃສ່ຮ່າງບົດສະຫລຸບດັ່ງກ່າວ ເພື່ອໃຫ້ມີຄວາມຄົບຖ້ວນສົມບູນຂຶ້ນຕື່ມອີກ ພ້ອມທັງໄດ້ມີການຕຳນິສິ່ງຂ່າວ, ກໍ່ສ້າງຊ່ວຍເຫລືອເຊິ່ງກັນແລະກັນ.

ໃນຕອນທ້າຍ, ທ່ານ ນາງ ສາຍພູເງິນ ອຸດົມສຸກ ໄດ້ຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ສາມາດຈັດຕັ້ງປະຕິບັດໄດ້ໃນໄລຍະຜ່ານມາ ແລະ ທ່ານຍັງໄດ້ເນັ້ນໜັກໃຫ້ພະນັກງານ ສພຂ ຈົ່ງສືບຕໍ່ເອົາໃຈໃສ່ປະຕິບັດໜ້າທີ່ວຽກງານຂອງຕົນຢ່າງຕັ້ງໜ້າບົນພື້ນຖານຄວາມສາມັກຄີ, ສືບຕໍ່ຕຳນິສິ່ງຂ່າວ, ກໍ່ສ້າງຊ່ວຍເຫລືອເຊິ່ງກັນແລະກັນ, ເອົາໃຈໃສ່ສ້າງຄວາມສາມັກຄີພາຍໃນໃຫ້ແໜ້ນແຟ້ນ ແລະ ພາຍນອກໃຫ້ກວ້າງຂວາງ, ຈົ່ງສືບຕໍ່ປະຕິບັດມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19 ຢ່າງເຂັ້ມງວດ.

(ນາງ ສຸກສະຫວັນ ອິນທະແສງ)

# ໜ່ວຍຊາວໜຸ່ມ ສພຂ ຫົວພັນ ໄດ້ຮັບທຸງໄຊນຳໜ້າ 4 ບຸກຄົ້ງປະຫວັດສາດ



(ສພຊ) ຕອນບ່າຍວັນທີ 1 ເມສາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ໄດ້ຈັດພິທີມອບຮັບນາມມະຍົດ 4 ບຸກ ແລະ ທຸງໄຊນຳໜ້າຂະບວນການແຂ່ງຂັນ 4 ບຸກຂອງໜ່ວຍຊາວໜຸ່ມ ສພຂ ຫົວພັນ ໂດຍການມອບຂອງສະຫາຍ ນາງ ແສງເພັດ ພົມມະນີ ຮອງເລຂາຄະນະບໍລິຫານງານຊາວໜຸ່ມແຂວງ ແລະ ຮັບໂດຍສະຫາຍ ຄອນສະຫວັນ ຂັນທະວີໄຊ ເລຂາໜ່ວຍຊາວໜຸ່ມ ສພຂ; ເຂົ້າຮ່ວມມີສະຫາຍ ຄຳຟອງ ກົ້ວມີໄຊ ຮອງເລຂາໜ່ວຍພັກ, ກຳມະການຄະນະປະຈຳ, ເລຂາທິການ ສພຂ, ມີແຂກຖືກເຊີນຈາກຄະນະຊາວໜຸ່ມແຂວງ, ອົງການພາຄີ ແລະ ຊາວໜຸ່ມແຮກສ່ຽວຫ້ອງວ່າການແຂວງ ຕະຫລອດຮອດສະມາຊິກພາຍໃນໜ່ວຍເຂົ້າຮ່ວມຢ່າງພ້ອມພຽງ.

ໜ່ວຍຊາວໜຸ່ມ ສພຂ ຫົວພັນ ໄດ້ຮັບທຸງໄຊນຳໜ້າ 4 ບຸກຄັ້ງນີ້ ເປັນຄັ້ງທຳອິດ ແລະ ຄັ້ງປະຫວັດສາດຂອງໜ່ວຍ ເຊິ່ງໄດ້ສະແດງໃຫ້ເຫັນໝາກຜົນ ແລະ ຜົນສຳເລັດໃນການຈັດຕັ້ງຜັນຂະຫຍາຍວຽກງານຊາວໜຸ່ມພາຍໃນໜ່ວຍກໍຄືການຈັດຕັ້ງປະຕິບັດຂໍ້ແຂ່ງ 4 ບຸກຂອງຊາວໜຸ່ມປະຊາຊົນປະຕິວັດລາວວາງອອກ. ໜ່ວຍຊາວໜຸ່ມ ສພຂ ຫົວພັນມີສະມາຊິກພາຍໃນໜ່ວຍທັງໝົດ 37 ສະຫາຍ ຍິງ 14 ສະຫາຍ.

ໃນໂອກາດທີ່ສະຫາຍ ນາງ ແສງເພັດ ພົມມະນີ ໄດ້ເຂົ້າຮ່ວມໃນພິທີ ສະຫາຍຍັງໄດ້ມີຄຳເຫັນໂອ້ລົມຕໍ່ບັນດາສະມາຊິກຊາວໜຸ່ມພາຍໃນໜ່ວຍ ເຊິ່ງສະຫາຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາຜົນງານດ້ານຕ່າງໆທີ່ຄະນະໜ່ວຍຊາວໜຸ່ມ ແລະ ສະມາຊິກຊາວໜຸ່ມພາຍໃນໜ່ວຍ ສພຂ ຍາດມາໄດ້ໄລຍະຜ່ານມາ, ພ້ອມນັ້ນ ສະຫາຍຍັງໄດ້ຮຽກຮ້ອງໃຫ້ຊາວໜຸ່ມພາຍໃນໜ່ວຍ ຈົ່ງສືບຕໍ່ຮັກສາມູນເຊື້ອນາມມະຍົດຄັ້ງນີ້ໃຫ້ໝັ້ນຄົງ ແລະ ສືບຕໍ່ຈັດປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມແຂວງຫົວພັນ ກໍຄືມະຕິກອງປະຊຸມໃຫຍ່ຂອງໜ່ວຍຊາວໜຸ່ມຂອງຕົນ ໂດຍສະເພາະແມ່ນຂໍ້ແຂ່ງຂັນ 4 ບຸກຂອງຊາວໜຸ່ມປະຊາຊົນປະຕິວັດລາວວາງອອກໃຫ້ໄດ້ຮັບຜົນສຳເລັດ ແລະ ປາກົດຜົນເປັນຈິງ.

(ເວີນ ແກ້ວບຸນມີ)

# ພະແນກພະລັງງານ ແລະ ບໍ່ແຮ່ແຂວງ ມອບຊຸດຄອມພິວເຕີ ແລະ ປິ້ນເຕີໃຫ້ ສພຂ ສະຫວັນນະເຂດ



(ສພຊ) ໃນຕອນເຊົ້າວັນທີ 6 ເມສາ 2022 ທີ່ສະພາປະຊາຊົນແຂວງສະຫວັນນະເຂດ, ທ່ານ ບຸນລ້ອນ ລີໄຊຍະລາດ ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ແຂວງສະຫວັນນະເຂດ ພ້ອມດ້ວຍຄະນະ ໄດ້ນຳເອົາຊຸດຄອມພິວເຕີຕັ້ງໂຕະ ຈຳນວນ 1 ຊຸດ ແລະ ເຄື່ອງປິ້ນເຕີ (canon LPB6030) ຈຳນວນ 1 ໜ່ວຍ ລວມມູນຄ່າ 5,3 ລ້ານກີບ ມອບໃຫ້ສະພາປະຊາຊົນແຂວງ ໂດຍການກ່າວຮັບຂອງທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ ໂດຍມີທ່ານ ພູທອນ ພຸດທະຂັນຕິ ເລຂາທິການສະພາປະຊາຊົນແຂວງເຂົ້າຮ່ວມ.

ໂອກາດດັ່ງກ່າວ, ທ່ານ ກົງແກ້ວ ມີວໍລະຈັກ ໄດ້ສະແດງຄວາມຂອບໃຈຕໍ່ກັບການຊ່ວຍເຫລືອໃນຄັ້ງນີ້ ແລະ ຈະນຳເອົາເຄື່ອງດັ່ງກ່າວ ໄປມອບຕໍ່ໃຫ້ຈຸດສຸມຈຽງຕູບ ເມືອງເຊໂປນ ເພື່ອຄວາມສະດວກໃນການນຳໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານ.

ສຳລັບເຄື່ອງທີ່ນຳມາມອບໃນຄັ້ງນີ້ ແມ່ນໄດ້ຮັບການອຸປະຖຳຈາກກຸ່ມບໍລິສັດ ຄູນໄຊພັດທະນາ ກໍ່ສ້າງ.

(ນາງ ຄອນສະຫວັນ ເມກສະຫວັນ)

# ຄະນະປະຈຳ ສພຂ ສາລະວັນ ສະຫລຸບການເຄື່ອນໄຫວວຽກງານຮອບດ້ານ ປະຈຳງວດ I

(ສພຊ) ໃນຕອນບ່າຍຂອງວັນທີ 4 ເມສານີ້ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຄະນະປະຈຳສະພາປະຊາຊົນແຂວງສາລະວັນ ໄດ້ເປີດກອງປະຊຸມສະຫລຸບການເຄື່ອນໄຫວວຽກງານຮອບດ້ານ ປະຈຳງວດ I ໂດຍການເປັນປະທານຂອງທ່ານ ສີເຮັ້ງ ທອມສົມບັດ ປະທານ ສພຂ, ມີຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ ພ້ອມດ້ວຍພະນັກງານ-ລັດຖະກອນສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ໄດ້ຮັບຟັງການລາຍງານຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈຳງວດ I ແລະ ທິດທາງແຜນການປະຈຳງວດ II ຂອງຄະນະປະຈຳສະພາປະຊາຊົນແຂວງ; ຈາກນັ້ນ, ກອງປະຊຸມຍັງໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງເລິກເຊິ່ງ ຕໍ່ຮ່າງບົດສະຫລຸບຂອງຄະນະປະຈຳ; ຄົ້ນຄວ້າ, ປຶກສາຫາລືວຽກງານຈຳນວນໜຶ່ງ. ທັງນີ້ ກໍເພື່ອສ້າງຄວາມເປັນເອກະພາບຮ່ວມກັນ ເພື່ອໃຫ້ເຮັດແຜນການປະຈຳງວດ II ໃນຕໍ່ໜ້າມີຜົນສຳເລັດ.

ທ່ານ ສີເຮັ້ງ ທອມສົມບັດ ໄດ້ກ່າວວ່າ: ກອງປະຊຸມຄັ້ງນີ້ ເປັນກອງປະຊຸມເປີດກວ້າງຕາມມາດຕາ 67 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ເພື່ອເປັນການສະຫລຸບຜົນການເຄື່ອນໄຫວຂອງຄະນະປະຈຳສະພາປະຊາຊົນແຂວງ ແລະ ພ້ອມກັນສືບຕໍ່ຈັດຕັ້ງປະຕິບັດທິດທາງແຜນການຕໍ່ໜ້າງວດ II ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ເປັນຕົ້ນແມ່ນສຶກສາອົບຮົມການເມືອງແນວຄິດ ໂດຍສືບຕໍ່ຜັນຂະຫຍາຍມະຕິກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX ຕິດພັນກັບມະຕິສຳຄັນຕ່າງໆຂອງສູນກາງ ແລະ ຂອງແຂວງ ໃຫ້ເຂົ້າສູ່ລວງເລິກ; ຮຽກຮ້ອງໃຫ້ຄະນະກຳມະການ ແລະ ຄະນະເລຂາທິການຊີ້ນຳ-ນຳພາຂະແໜງການຊ່ວຍວຽກ ເພື່ອເປັນເສນາທິການໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງ ໃຫ້ມີຄວາມເຂັ້ມແຂງຂຶ້ນກວ່າເກົ່າ ເປັນຕົ້ນແມ່ນການປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການປັບປຸງນິຕິກຳໃຕ້ກົດໝາຍຈຳນວນໜຶ່ງ ສະບັບທີ່ຮັບຮອງໄປແລ້ວໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ໃຫ້ໄດ້ຮັບຮອງ ແລະ ປະກາດໃຊ້ຢ່າງເປັນທາງການ ທັງປະສານສົມທົບແຕ່ຫົວທີໃນການກະກຽມນິຕິກຳໃຕ້ກົດໝາຍທີ່ຈະພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ; ຕິດຕາມກວດກາໃນຂົງເຂດເສດຖະກິດ ແລະ ວັດທະນະທຳ-ສັງຄົມ ເຊັ່ນ ການເຊົ່າສຳປະທານທີ່ດິນທີ່ມີຜົນກະທົບຕໍ່ສັງຄົມ, ການຕິດຕາມກວດກາລາຄາສິນຄ້າທີ່ມີການເໜັງຕີງ, ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ການຈັດ ຕັ້ງປະຕິບັດວາລະແຫ່ງຊາດ; ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄວາມເປັນເອກະພາບ ແລະ ຮັບປະກັນໃຫ້ວຽກງານຂອງຕົນມີຄວາມກົມກຽວ ແລະ ມີຜົນສຳເລັດສູງ ໂດຍຜ່ານການປະຕິບັດພາລະບົດບາດສິດ ແລະ ໜ້າທີ່ ຢ່າງຄົບຖ້ວນ ຕາມລັດຖະທຳມະນູນ ແລະ ກົດໝາຍ.



(ນາງ ຄັດສອນ ຮຸ່ງສະຫວ່າງ)

108 ສາລະ

# ການຄຳນວນທຳນາຍ ປະຈຳປີ ພສ 2562

**ໂດຍ: ຜູ້ອື່ນ**



ປີໃໝ່ລາວທຸກໆປີຈະມີບັນດານັກປາດ ຫລື ອາຈານ ແລະ ຄະລືທັດຜູ້ມີຄວາມຮອບຮູ້ທາງດ້ານວິຊາໂຫລາສາດຄຳນວນເກນຕ່າງໆຕາມຫລັກເກນເປັນຕົ້ນແມ່ນຄຳນວນກ່ຽວກັບດິນຟ້າອາກາດ, ພືດພັນທັນຍາຫານ ວ່າໃນປີໃໝ່ຈະໄດ້ຮັບໝາກຜົນດີ ຫລື ບໍ່ ເຊິ່ງໃນບົດນີ້ຈະໄດ້ນຳສະເໜີການຄຳນວນປະຕິທິນລາວຂອງວັດປ່າໂພນເພົາວະນາຣາມ ແຂວງຫລວງພະບາງ ສຳລັບປີ ພສ 2565 ນີ້ ການຄຳນວນຕາມໂຫລາສາດປີໃໝ່ລາວປີນີ້ ໄດ້ມີການສະຫລອງກັນໃນລະຫວ່າງວັນທີ 14-16 ເມສາ 2022 ເປັນເວລາ 3 ວັນ ວັນທີ 14 ເປັນວັນສັງຂານລ່ວງ ກົງກັບມື້ຂຶ້ນ 13 ຄ່ຳ ເດືອນ 5 ພສ 2564, ວັນທີ 15 ກົງກັບມື້ຂຶ້ນ 14 ຄ່ຳ ເດືອນ 5 ພສ 2564 ເປັນວັນເນົາ ແລະ ວັນທີ 16 ກົງກັບມື້ຂຶ້ນ 15 ຄ່ຳ ເດືອນ 5 ພສ 2564 ເປັນວັນສັງຂານຂຶ້ນ ເຊິ່ງໃນມື້ດັ່ງກ່າວນີ້ ເວລາ 13 ໂມງ 49 ນາທີ 48 ວິນາທີ ຈະເປັນມື້ກຸະເຫລີງສົກປີໃໝ່ລາວ ແລະ ປ່ຽນຈຸລະສັກກະລາດ ຈສ 1384 ເປັນປີຂານ (ເຕົ່າຍີ່) ຈັນຕະອາສົກ ປີກກະຕິມາດ, ປີກກະຕິສຸຣະທິນ, ປີກກະຕິວາຣ ເຊິ່ງປີນີ້ເປັນຜຽນຂອງທິດາອົງທີ 5 ຂອງພະຍາກະບິນລະພົມ ມີນາມວ່າ ນາງ ກິຣິນີເທວີ ທັດດອກມົນທາ ພ້ອມດ້ວຍເຄື່ອງປະດັບແກ້ວມໍຣະກົດ (ແກ້ວສີຂຽວ), ອາຫານແມ່ນກົ່ວ-ງາ, ມືຂວາກືອໍຊ້າງ, ມືຊ້າຍກືປືນ ແລະ ຍືນມາເທິງຫລັງຄະຊາ (ຊ້າງ) ເປັນພາຫະນະ; ຕາມເກນຄຳນວນຂອງວັດດັ່ງກ່າວ ໃນປີນີ້ແມ່ນ: ເກນພິຣຸນະສາດ: ພະອາທິດເປັນອະທິບໍດີ ນາກຫລິ້ນນ້ຳ 4 ໂຕ, ບັນດານໃຫ້ຝົນຕົກ 400 ຫ່າ ໃນນັ້ນ, ຕົກໃນຈັກກະວານ 160 ຫ່າ ຕົກໃນປ່າຫິມະພານ 120 ຫ່າ ຕົກໃນມະຫາສະໝຸດ 80 ຫ່າ ແລະ ຕົກໃນໂລກມະນຸດ 40 ຫ່າ; ເກນທາຣາທິຄຸນ: ຕົກຣາສີເຕໂຊ ນ້ຳຈະນ້ອຍ, ຝົນຕົ້ນປີຈະຕົກພໍດີ-ກາງປີຈະມີໜ້ອຍ-ປາຍມີຈະມີຫລາຍ ນາລຸ່ມຈະດີ ນາດອນຈະບໍ່ດີ ຈະມີລົມພັດແຮງທີ່ສຸດຈາກທິດທັງ 4 ຕາມລະດູການ; ເກນທັນຍາຫານ: ປີນີ້ຊື່ວ່າປັດສິມະ ເຂົ້າກ້າໄຮ່ນາຈະໄດ້ຜົນ 1 ສ່ວນ ເສຍ 5 ສ່ວນ ໂພສະນາອາຫານຈະມີສົມຄວນ, ປະຊາຊົນຈະທຸກແດ່ ສຸກແດ່ ປະປົນກັນໄປ; ເກນຜະລາ ມັງສາຫານ: ຜົນໝາກໄມ້ຈະເປັນດ້ວງ ເປັນແມງຫລາຍ, ພິກພູຈະແພງ, ຊີ້ນປາອາຫານຈະມີພໍຄວນ; ເກນກາລະໂຍກ: ວັນພຸດເປັນທຸງໄຊ, ວັນອັງຄານເປັນອະທິບໍດີ, ວັນອາທິດເປັນອຸບາດ, ວັນພະຫັດເປັນໂລກາວິນາສ ແລະ ເກນຣຸກຂະຊາດ: ໄມ້ງິ້ວ ເປັນພະຍາ ບ້ານເມືອງມີຄວາມສະຫງົບສຸກດີ ແຕ່ຝົນຟ້າບໍ່ຄ່ອຍດີ.

ສາລາກະວີ

# ສະບາຍດີປີໃໝ່

**#ດອກຂະຍອມ**

✻ ແລເຫັນແສງສ່ອງຟ້າ
ປີສະລູຊິລາໄລ
ຟັງຍິນແຊວໆຫ້າວ
ຂານນຳພອນຍື່ນໃຫ້
ກ້ຳຝ່າຍທຳລະດີ
ຫ່າງໄກກັນແລ້ວ
ປີເສືອຊິແທນບ່ອນ
ມາພ້ອມໂຊກໄຊ

✻ ຝາງຄູນໄຂກົບອ້າ
ກະດັນງາແຊມຊອນ
ກະເລົາງາມນຳຕ້ອນ
ປະສິງຍໍຍື່ນໃຫ້
ຈຳປາອວດໂຊວ໌ໂສມ
ກິ່ນຂະຍອມຫອມເອົ້າ
ເປັນພອນຝາກສິ່ງ
ຖວາຍເຈົ້າພັກປະຊາ

✻ ປີໃໝ່ລາວມາຮອດແລ້ວ
ມອບແດ່ການນຳພັກ
ພ້ອມພໍ່ປວງປະຊາເຊື້ອ
ສົມປະສົງມ່ວນແມ້ງ
ຍໍຍື່ນພວງຫອມ
ຢູ່ກະເສີມສະຖຽນໝັ້ນ
ເໜືອກາງໃຕ້ຕ່ຳ
ພະໄນມຸ້ງຄິດໝາຍ

✻ ສິ່ງພອນໄຊຍື່ນຕ້ອນ
ປີໃໝ່ໝູນວຽນມາ
ສຸກກາຍໃຈພຽງພ້ອມ
ວັນຄືນສຸກສືບສ້າງ
ເປັນກອນກາບກະວີໄຂ
ສະຫງ່າງາມລືກ້ອງ
ປວງຊົນຊ້ອຍຊື່ນ
ເມືອງບ້ານພັດທະນາ

ສາລາສະບາຍກາຍໃຈ

# ແຫລ່ງໂປຣຕີນ ສຳລັບຄົນທີ່ຫລຸດນ້ຳໜັກ

**#ສາວແວ່ນ**




"ໂປຣຕີນ" ເປັນສານອາຫານທີ່ມີກົດອະມີໂນທີ່ຈຳເປັນຕໍ່ຮ່າງກາຍ ມີໜ້າທີ່ການສ້າງຄວາມແຂງແຮງ ແລະ ຊ່ວຍໃນການເຮັດວຽກຂອງກະດູກ, ກ້າມເນື້ອ ແລະ ຜິວໜັງ; ແຕ່ທ່ານຮູ້ບໍ່ວ່າຖ້າກິນທາດໂປຣຕີນໃນທາງທີ່ຖືກຈະຊ່ວຍຫລຸດນ້ຳໜັກ ແລະ ໄຂມັນໄດ້; ມື້ນີ້, ໃນຄໍລຳສຸກສະບາຍກາຍໂລດາສະບັບນີ້ ເຮົາມາຮູ້ຈັກແຫລ່ງໂປຣຕີນທີ່ບໍ່ຄວນພາດ ທີ່ຈະຮັບປະທານ.

**1. ໄຂ່:** ໄຂ່ອຸດົມໄປດ້ວຍສານອາການທີ່ມີຄຸນປະໂຫຍດ ແລະ ຍັງຊ່ວຍໃຫ້ທ່ານຮູ້ສຶກອີ່ມໄວ ແລະ ກິນໜ້ອຍລົງ ເຊິ່ງມັນຈະຊ່ວຍຫລຸດປະລິມານແຄລໍຣີທີ່ກິນໄດ້ ແຕ່ຖ້າຢ້ານວ່າແຄລໍຣີທີ່ມາຈາກໄຂ່ແດງຫລາຍເກີນໄປ ສາມາດເລືອກຮັບປະທານແຕ່ໄຂ່ຂາວໄດ້.

**2.ປາແຊວມອນ:** ມີປະລິມານໂປຣຕີນຫລາຍ ແລະ ສາມາດຍ່ອຍໄດ້ງ່າຍ ມີປະໂຫຍດດ້ານສຸຂະພາບຫລາຍ ເໝາະສຳລັບຄົນທີ່ຕ້ອງການຫລຸດນ້ຳໜັກ.

**3. ເອິກໄກ່:** ມີໄຂມັນໜ້ອຍກວ່າຊີ້ນສັດປະເພດອື່ນໆ ສຳລັບທ່ານທີ່ຕ້ອງການສ້າງກ້າມເນື້ອ ຫລື ຢາກຫລຸດນ້ຳໜັກ ຈະຕ້ອງຫລຸດອາຫານທີ່ມີໄຂມັນສູງ ຄຽງຄູ່ກັບການກິນໂປຣຕີນ ແລະ ອອກກຳລັງກາຍ ດັ່ງນັ້ນ, ເອິກໄກ່ຈຶ່ງເປັນອາຫານທີ່ດີທີ່ສຸດສຳລັບການການຫລຸດນ້ຳໜັກ ແລະ ສ້າງກ້າມເນື້ອ.

**4.ໂຢເກີດ (ນ້ຳສົ້ມ):** ມີຈຸລິນຊີທີ່ເປັນປະໂຫຍດຫລາຍ ຊ່ວຍໃນການຂັບຖ່າຍ ພ້ອມທັງມີໂປຣຕີນຫລາຍ ແລະ ງ່າຍຕໍ່ການຊອກຊື້ ແລະ ລາຄາບໍ່ແພງ.

**5. ເນີຍໝາກຖົ່ວດິນ:** ອຸດົມໄປດ້ວຍໂປຣຕີນທີ່ຊ່ວຍໃນການເສີມສ້າງ ແລະ ບຳລຸງກ້າມເນື້ອທີ່ເຊື່ອມໂຊມ; ນອກນັ້ນ, ຍັງອຸດົມໄປດ້ວຍໄຂມັນດີ ແຕ່ບໍ່ຄວນເອົາເນີຍຖົ່ວດິນມາກິນລ້າໆ ແລະ ຄວນຮັບປະທານເນີຍຖົ່ວດິນປະມານ 2 ບ່ວງຕໍ່ມື້ເທົ່ານັ້ນ.

**6. ນົມ:** ແຫລ່ງໂປຣຕີນເຊັ່ນນົມທີ່ມີໄຂມັນຕ່ຳ ເປັນທາງເລືອກທີ່ດີເມື່ອຕ້ອງການຫລຸດນ້ຳໜັກ ເຊັ່ນ ນົມຖົ່ວເຫລືອງ ຫລື ນົມອາວມອນ ທີ່ມີແຄລໍລີ່ນ້ອຍຫລາຍ ເມື່ອທຽບກັບນົມງົວ ພ້ອມທັງມີສານອາຫານທີ່ຊ່ວຍບຳລຸງຜິວ ບໍ່ເຮັດໃຫ້ຜິວໜັງລອກ ລວມທັງຫອຍຫ່ຽວກ່ອນໄວອັນຄວນ.

**7. ເຕົ້າຫູ້:** ທ່ານຮູ້ບໍວ່າເຕົ້າຫູ້ໜຶ່ງກ້ອນໃຫ້ທາດໂປຣຕີນບໍ່ນ້ອຍກວ່າຊີ້ນ ຈຶ່ງບໍ່ແມ່ນເລື່ອງແປກທີ່ຄົນກິນອາຫານເຈ ມັກຫັນມາຮັບປະທານເຕົ້າຫູ້ເປັນແຫລ່ງໂປຣຕີນຫລັກ ເພາະເຕົ້າຫູ້ຜະລິດຈາກຖົ່ວເຫລືອງ ເຊິ່ງມີທາດໂປຣຕີນທີ່ອຸດົມສົມບູນ ຈຶ່ງສາມາດຮັບປະທານໄດ້ຢ່າງສະບາຍໃຈ.

ສະຫລຸບລວມແລ້ວ ການຫລຸດນ້ຳໜັກບໍ່ຄວນອົດອາຫານ ພຽງແຕ່ດັດແປງເມນູສຳລັບຮ່າງກາຍ ເພື່ອໃຫ້ຮ່າງກາຍໄດ້ຮັບສານອາຫານທີ່ເໝາະສົມກັບຮ່າງກາຍ ໂດຍສະເພາະແມ່ນໂປຣຕີນ ແລະ ສິ່ງທີ່ສຳຄັນແມ່ນຈະເຮັດໃຫ້ມ່ວນກັບການລົດນ້ຳໜັກຕື່ມອີກ.

www.thairath.co.th


## ຍິ່ງອາຍຸຫຼາຍ ຍິ່ງມີຄວາມສ່ຽງໃນການເຈັບເປັນຈົນຮຸນແຮງ ຈາກພະຍາດໂຄວິດ-19



ດັ່ງນັ້ນ ອົງການອະນາໄມໂລກ ຈຶ່ງແນະນຳໃຫ້ ຜູ້ທີ່ມີອາຍຸຕັ້ງແຕ່ 60 ປີ ຂຶ້ນໄປ ແລະ ຜູ້ມີພະຍາດປະຈຳຕົວ ສັກວັກຊີນກັນ ພະຍາດໂຄວິດ-19 ເພື່ອ ປ້ອງກັນການເຈັບເປັນຈົນເຖິງຂັ້ນເຂົ້າໂຮງໝໍ ແລະ ເສຍຊີວິດ.

"ຢ່າລືມ ພາຄົນທີ່ທ່ານຮັກ ໄປສັກວັກຊີນກັນພະຍາດໂຄວິດ-19 ໃຫ້ຄົບທຸກເຂັມທີ່ແນະນຳ"

ນະຄອນຫຼວງວຽງຈັນ: ໂຮງໝໍສູນກາງ, ໂຮງໝໍເມືອງ 9 ຕົວເມືອງ, ວັດຈີນ ບ້ານດົງປ່າແຫຼບ, ສະຖາບັນກັນພະຍາດກອງທັບ ບ້ານໂພນຕ້ອງ

ບັນດາແຂວງ: ໂຮງໝໍແຂວງ, ໂຮງໝໍເມືອງ, ຈຸດບໍລິການທີ່ແຂວງຈັດໄວ້

# ລັດຖະສະພາປາກິສະຖານ ລົງຄະແນນສຽງບໍ່ໄວ້ວາງໃຈ ນາຍົກລັດຖະມົນຕີ

**ແປ ແລະ ຮຽບຮຽງ: ນາງ ປາກາລັກ ພົມມີໄຊ**

ທ່ານ ອິມຣານ ຂານ ນາຍົກລັດຖະມົນຕີປາກິສະຖານ ສິ້ນສຸດບົດບາດໃນຖານະເປັນຜູ້ນຳປະເທດ ຫລັງຈາກປະລາໄຊຈາກການລົງຄະແນນສຽງບໍ່ໄວ້ວາງໃຈໃນລັດຖະສະພາ ເນື່ອງຈາກເຫດການຄວາມວຸ້ນວາຍທາງການເມືອງອາທິດຜ່ານມາ.

ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ກອງປະຊຸມລັດຖະສະພາປາກິສະຖານ ເມື່ອວັນອາທິດທີ 10 ເມສາ 2022 ເພື່ອລົງຄະແນນສຽງບໍ່ມີໄວ້ວາງໃຈທ່ານ ອິມຣານ ຂານ ນາຍົກລັດຖະມົນຕີ, ເຮັດໃຫ້ທ່ານຕ້ອງລາອອກຈາກຕຳແໜ່ງຜູ້ນຳຂອງປະເທດ ພາຍຫລັງທີ່ບໍ່ໄດ້ຮັບຄວາມໄວ້ວາງໃຈໃນການບໍລິຫານປະເທດ ເນື່ອງຈາກວ່າ: ບໍ່ໄດ້ຜົນສຳເລັດໃນການປະຕິບັດໜ້າທີ່ຂອງທ່ານທີ່ທ່ານໄດ້ໃຫ້ຄຳໝັ້ນສັນຍາໃນການໂຄສະນາຫາສຽງຂອງທ່ານ ກ່ອນທີ່ຈະເຂົ້າຮັບຕຳແໜ່ງ.

ທ່ານ ອິມຣານ ຂານ ດຳລົງຕຳແໜ່ງນາຍົກລັດຖະມົນຕີເປັນເວລາຫລາຍກວ່າ 3 ປີທ່ານໄດ້ພະຍາຍາມເຮັດທຸກວິທີທາງເພື່ອໃຫ້ໄດ້ຢູ່ໃນຕຳແໜ່ງ ລວມທັງການຍຸບສະພາ ແລະ ຈັດການເລືອກຕັ້ງໃໝ່. ແຕ່ໃນອາທິດຜ່ານມາ ສານສູງສຸດໄດ້ຕັດສິນວ່າການກະທຳທັງໝົດຂອງທ່ານແມ່ນຜິດຕໍ່ລັດຖະທຳມະນູນ ແລະ ຜິດຕໍ່ກົດໝາຍ ສະນັ້ນ, ລັດຖະສະພາຈຶ່ງຈັດກອງປະຊຸມເພື່ອລົງຄະແນນສຽງ ແລະ ຜົນຂອງການລົງຄະແນນເຮັດໃຫ້ທ່ານຕ້ອງພົ້ນຈາກຕຳແໜ່ງ ດ້ວຍຄະແນນສຽງບໍ່ໄວ້ວາງໃຈ 174 ສຽງ ຫລາຍກວ່າເຄິ່ງໜຶ່ງຂອງຄະແນນສຽງທັງໝົດທີ່ມີ 342 ສຽງໃນລັດຖະສະພາ ເຊິ່ງເປັນຄັ້ງທຳອິດໃນປະຫວັດສາດການເມືອງຂອງປາກິສະຖານ ໃນຖານະເປັນນາຍົກລັດຖະມົນຕີທີ່ຕົກຕຳແໜ່ງດ້ວຍການລົງຄະແນນສຽງທີ່ບໍ່ໄວ້ວາງໃຈ.

ລັດຖະສະພາຂອງປາກິສະຖານ ກຳລັງຈະດຳເນີນກອງປະຊຸມໃນວັນຈັນນີ້ ເພື່ອລົງຄະແນນສຽງເລືອກຕັ້ງນາຍົກລັດຖະມົນຕີຄົນໃໝ່ ຄາດຄະເນວ່າທ່ານ ເຊບາດ ຊາຣິບ ຜູ້ນຳຝ່າຍຄ້ານ ນ້ອງຊາຍຂອງທ່ານ ນາວາບ ຊາຣິບ ອະດີດນາຍົກລັດຖະມົນຕີ ອາດຈະເປັນນາຍົກລັດຖະມົນຕີຄົນຕໍ່ໄປ.

**ແຫລ່ງຂ່າວ: AFP**



# ລັດຖະສະພາມາເລເຊຍ ດຳເນີນກອງປະຊຸມພິເສດ

**ແປ ແລະ ຮຽບຮຽງ: ນາກ ເມືອງມະໄນ**



ຕາມແຫຼ່ງຂ່າວໃຫ້ຮູ້ວ່າ: ລັດຖະສະພາມາເລເຊຍ ດຳເນີນກອງປະຊຸມພິເສດໃນວັນທີ 11 ເມສານີ້ ເພື່ອປຶກສາຫາລືກ່ຽວກັບຮ່າງລັດຖະທຳມະນູນ (ສະບັບປັບປຸງ) ສະບັບເລກທີ 3 ປີ 2022.

ກອງປະຊຸມລັດຖະສະພາພິເສດດັ່ງກ່າວ ປະກອບມີກອງປະຊຸມພິເສດຂອງສະພາຜູ້ແທນລາສະດອນໃນວັນຈັນທີ 11 ເມສາ ແລະ ກອງປະຊຸມພິເສດຂອງສະພາສູງໃນວັນອັງຄານທີ 12 ເມສານີ້.

ໃນວາລະກອງປະຊຸມ ແລະ ການປຶກສາຫາລື ທີ່ກ່ຽວຂ້ອງກັບການມອບອຳນາດ ພາຍໃຕ້ມາດຕາ 10 ຂອງລັດຖະທຳມະນູນເມເລເຊຍ ໃນການອະນຸຍາດໃຫ້ມີຂໍ້ກຳນົດໃໝ່ຫ້າມບໍ່ໃຫ້ສະມາຊິກລັດຖະສະພາມີການຍ້າຍພັກ.

ແຕ່ຮ່າງລັດຖະທຳມະນູນ (ສະບັບປັບປຸງ) ກ່ຽວກັບການຕ້ານການຫ້າມບໍ່ໃຫ້ຍ້າຍພັກ ທີ່ໄດ້ຈັດເຂົ້າໃນວາລະກອງປະຊຸມ, ການປຶກສາຫາລື ແລະ ການຮັບຮອງເອົາໃນກອງປະຊຸມພິເສດຄັ້ງນີ້ ໄດ້ຖືກເລື່ອນເວລາອອກໄປປຶກສາຫາລືໃນວາລະກອງປະຊຸມສະພາພິເສດຄັ້ງຕໍ່ໄປ ໂດຍກຳນົດເວລາແມ່ນຈະມີການແຈ້ງຕື່ມພາຍຫລັງ.

ການເລື່ອນເວລາດັ່ງກ່າວ ແມ່ນໄດ້ຮັບການຕົກລົງເຫັນດີໃນກອງປະຊຸມຂອງຄະນະກຳມະການຊີ້ນຳກ່ຽວກັບການຫັນປ່ຽນ ແລະ ສະຖຽນລະພາບທາງດ້ານການເມືອງ ເມື່ອອາທິດຜ່ານມາ.

ວາລະຂອງກອງປະຊຸມ ແລະ ການປຶກສາຫາລື ກ່ຽວກັບຮ່າງກົດໝາຍຕ້ານການຍ້າຍພັກ ໄດ້ຖືກເລື່ອນເວລາເປັນຄັ້ງທີສອງ ຫລັງຈາກໄດ້ມີກຳນົດຈະຈັດຂຶ້ນໃນວັນທີ 24 ມີນາຜ່ານມາ.

ກອງປະຊຸມພິເສດຄັ້ງນີ້ ເປັນຄັ້ງທີ 3 ໃນຮອບໜຶ່ງປີ ຫລັງຈາກມີການດຳເນີນກອງປະຊຸມພິເສດກ່ຽວກັບການປະກາດພາວະສຸກເສີນ ທີ່ຈັດຂຶ້ນໃນວັນທີ 26 ກໍລະກົດ 2021 ແລະ ກອງປະຊຸມກ່ຽວກັບບັນຫາໄພພິບັດນ້ຳຖ້ວມໃນວັນທີ 20 ມັງກອນ 2022.

ສຳລັບກອງກອງປະຊຸມຄັ້ງທີ 2 ສະໄໝສາມັນເທື່ອທີ 5 ຂອງລັດຖະສະພາ ຊຸດທີ XIV ຈະເລີ່ມແຕ່ວັນທີ 18 ກໍລະກົດ-4 ສິງຫານີ້ ແລະ ກອງປະຊຸມຄັ້ງທີ 3 ແມ່ນຈະດຳເນີນແຕ່ວັນທີ 26-15 ທັນວານີ້.

**ແຫລ່ງຂ່າວ: STRAITS TIMES**







# ກົດໝາຍວ່າດ້ວຍການຟື້ນຟູ ແລະການລົ້ມລະລາຍຂອງວິສາຫະກິດ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ມາດຕາ 26 ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງກະສິກຳ**

ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງກະສິກຳ ມີ ດັ່ງນີ້:

1. ການຄັດເລືອກ, ປະດິດສ້າງ, ຂະຫຍາຍແນວພັນພືດ, ສັດ ທີ່ມີປະສິດທິພາບ ແລະ ຄຸນນະພາບສູງ;
2. ການປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດ;
3. ການປູກຝັງ ແລະ ລ້ຽງສັດ ທີ່ມີປະສິດທິຜົນສູງ;
4. ການປະດິດສ້າງວັດສະດຸ, ເຄື່ອງກົນຈັກ ແລະ ອຸປະກອນຮັບໃຊ້;
5. ການເກັບຮັກສາ ແລະ ການປຸງແຕ່ງຜະລິດຕະພັນກະສິກຳ;
6. ການສ້າງບຸກຄະລາກອນ;
7. ການພັດທະນາວິສາຫະກິດກະສິກຳ;
8. ການບໍລິການ.

ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງກະສິກຳ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 27 ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງບໍລິການ**

ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງບໍລິການ ມີ ດັ່ງນີ້:

1. ການຄົ້ນຄວ້າ, ການເລືອກເຟັ້ນ ແລະ ການນຳໃຊ້ ເຕັກໂນໂລຊີລະດັບສູງ, ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ທັນສະໄໝເຂົ້າໃນ ການຄ້າ, ຄົມມະນາຄົມ, ການເງິນ, ສາທາລະນະສຸກ, ການສຶກສາ, ການທ່ອງທ່ຽວ ແລະ ຂະແໜງອື່ນ;
2. ການສ້າງບຸກຄະລາກອນ;
3. ການສົ່ງເສີມການນຳໃຊ້ປັນຍາປະດິດ ເຂົ້າໃນການບໍລິການຢ່າງມີປະສິດທິຜົນ;
4. ການບໍລິການ ເຕັກໂນໂລຊີ ການສື່ສານ ຂໍ້ມູນ ຂ່າວສານ, ອາວະກາດ, ພູມິສາດ ແລະ ເຕັກໂນໂລຊີລະດັບສູງອື່ນ.

ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງບໍລິການ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ພາກທີ V
## ການສົ່ງເສີມເຕັກໂນໂລຊີລະດັບສູງ

**ມາດຕາ 28 ການສົ່ງເສີມດ້ານນະໂຍບາຍເຕັກໂນໂລຊີລະດັບສູງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນວຽກງານເຕັກໂນໂລຊີລະດັບສູງທົ່ວໄປ ຈະໄດ້ຮັບນະ ໂຍບາຍສົ່ງເສີມໃນການຄົ້ນຄວ້າ, ການພັດທະນາເຕັກໂນໂລຊີລະດັບສູງ, ການປະດິດສ້າງ, ການນຳໃຊ້ ແລະ ການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 29 ການສົ່ງເສີມດ້ານການພັດທະນາຊັບພະຍາກອນມະນຸດ**

ການສົ່ງເສີມດ້ານການພັດທະນາຊັບພະຍາກອນມະນຸດ ດຳເນີນຕາມແຜນພັດທະນາ ແລະ ນຳໃຊ້ ບຸກຄະລາກອນ, ຈັດແບ່ງງົບປະມານໃນການສ້າງໂຄງລ່າງພື້ນຖານອັນຈຳເປັນ, ສິ່ງອຳນວຍຄວາມສະດວກ, ສະຖານ ທີ່ຝຶກອົບຮົມ ແລະ ໃຫ້ທຶນການສຶກສາໃນການສ້າງ, ບຳລຸງ, ຍົກລະດັບດ້ານວິຊາສະເພາະ, ເຕັກນິກວິຊາການ ດ້ານການຄຸ້ມຄອງ, ການຄົ້ນຄວ້າ ແລະ ການບໍລິການເຕັກໂນໂລຊີລະດັບສູງ.

**ມາດຕາ 30 ການສົ່ງເສີມດ້ານການພັດທະນາການຕະຫຼາດເຕັກໂນໂລຊີລະດັບສູງ**

ການສົ່ງເສີມດ້ານການພັດທະນາການຕະຫຼາດເຕັກໂນໂລຊີລະດັບສູງ ມີຮູບການ ດັ່ງນີ້:

1. ລົງທຶນກໍ່ສ້າງໂຄງລ່າງພື້ນຖານໃຫ້ແກ່ ຕະຫຼາດ, ສະຖານທີ່ວາງສະແດງ, ສູນແລກປ່ຽນຂໍ້ມູນ ຂ່າວສານ ເຕັກໂນໂລຊີລະດັບສູງ;
2. ນຳສະເໜີ, ຊື້ ຂາຍ, ສະໜອງການບໍລິການເປັນຄົນກາງ, ຕີລາຄາ, ກຳນົດລາຄາ, ປະເມີນເຕັກໂນໂລຊີລະດັບສູງ;
3. ບໍລິການໃຫ້ຄຳປຶກສາດ້ານ ເຕັກນິກ, ການລົງທຶນ, ກົດໝາຍ, ການເງິນ, ການປະກັນໄພ, ການປົກປ້ອງຊັບສິນທາງປັນຍາດ້ານເຕັກໂນໂລຊີລະດັບສູງ ແລະ ການບໍລິການອື່ນ;
4. ຈັດຕັ້ງ ແລະ ຊຸກຍູ້ ການເຂົ້າຮ່ວມຕະຫຼາດນັດ ແລະ ງານວາງສະແດງສິນຄ້າເຕັກໂນໂລຊີລະ ດັບສູງ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 31 ການສົ່ງເສີມດ້ານການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີລະດັບສູງ**

ການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີລະດັບສູງ ທີ່ນຳໃຊ້, ດັດປັບ ເພື່ອປ່ຽນແທນເຕັກໂນໂລຊີ ທີ່ນຳເຂົ້າຈາກຕ່າງປະເທດ ແລະ ການປະດິດສ້າງເຕັກໂນໂລຊີລະດັບສູງໃໝ່ ຈະໄດ້ຮັບນະໂຍບາຍສົ່ງເສີມ ດັ່ງນີ້:

1. ນະໂຍບາຍຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
2. ການສະໜັບສະໜູນຈາກກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;
3. ການສະໜັບສະໜູນຈາກສາກົນ ແລະ ແຫຼ່ງທຶນອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 32 ການສົ່ງເສີມດ້ານການຖ່າຍທອດເຕັກໂນໂລຊີລະດັບສູງ**

ການຖ່າຍທອດເຕັກໂນໂລຊີລະດັບສູງ ຈະໄດ້ຮັບນະໂຍບາຍສົ່ງເສີມຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້, ກົດໝາຍວ່າດ້ວຍການຖ່າຍທອດເຕັກໂນໂລຊີ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ອ່ານຕໍ່ສະບັບໜ້າ...




**ກົດໝາຍວ່າດ້ວຍ**
**ການສຳຫລວດວັດແທກ ແລະ ສ້າງແຜນທີ່**

4. ຜະລິດຕະພັນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໝາຍເຖິງ ຜົນຂອງການສຳຫລວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຜ່ານການກວດກາ ແລະ ຢັ້ງຢືນຄຸນນະພາບ ຕາມມາດຕະຖານເຕັກນິກຂອງການສຳຫລວດວັດແທກ ແລະ ສ້າງແຜນທີ່;

5. ຕາໜ່າງການສຳຫລວດວັດແທກຂັ້ນເຕັກນິກ ໝາຍເຖິງ ຕາໜ່າງການສຳຫລວດວັດແທກຂອງຂະແໜງການທີ່ສຳຫລວດວັດແທກເກາະກ່າຍມາຈາກຕາໜ່າງເຄົ້າການສຳຫລວດວັດແທກແຫ່ງຊາດ;

6. ຂອບເຂດການປົກຄອງ ໝາຍເຖິງ ເຂດແດນຂອງ ບ້ານ, ເມືອງ, ເທດສະບານ, ນະຄອນ, ແຂວງ, ນະຄອນຫລວງ ແລະ ປະເທດ ຕາມການກຳນົດຂອງອົງການທີ່ມີສິດອຳນາດ.




## ປີໃໝ່ໂຊກໃຫຍ່...

ອີງຕາມຮີດຄອງປະເພນີທີ່ສືບທອດກັນມາໃນແຕ່ລະປີ ເພິ່ນຈະມີຄຳທຳນາຍ ເຊິ່ງໃນປີນີ້ມີ ຄຳທຳນາຍ ໂດຍການຄຳນວນຂອງສາທຸ ບຸນທັນ ປຸນຍະການະເຖຣະ ວັດປ່າໂພນເພົາວະນາຣາມ, ນະຄອນຫລວງພະບາງ ດັ່ງນີ້:

ຄຳທຳນາຍນາງສັງຂານປີໃໝ່ລາວ ຈສ 1384, ຄສ. 2022, ພສ. 2565

ວັນສັງຂານລ່ວງ: ວັນພະຫັດ ຂຶ້ນ 13 ຄ່ຳ, ເດືອນ 5, ພສ. 2564 ກົງກັບວັນທີ 14 ເມສາ 2022, ເວລາ 9 ໂມງ 52 ນາທີ 12 ວິນາທີ.

ວັນສັງຂານເນົາ: ວັນສຸກ ຂຶ້ນ 14 ຄ່ຳ, ເດືອນ5,ພ.ສ 2564 ກົງກັບວັນທີ່ 15 ເມສາ 2022 (ເນົາວັນດຽວ).

ວັນສັງຂານຂຶ້ນ: ວັນເສົາ ຂຶ້ນ 15 ຄ່ຳ, ເດືອນ 5, ພສ. 2564 ກົງກັບວັນທີ່ 16 ເມສາ 2022, ເວລາ 13 ໂມງ 49 ນາທີ 48 ວິນາທີ ປ່ຽນວັນຖະເຫລີງ ສົກປີໃໝ່ລາວຈຸນລະ ສັກກະຣາດເປັນ1384

ນາງສັງຂານ: ນາງເທພທິດາອົງທີ 5 ຂອງພຣະຍາກະບິນລະພຣົມ ຊື່ງພຣະນາມວ່າ: "ກິຣິນີເທວີ" ຊົງພະຫຸຣັດທັດດອກມົນທາ ອາພອນປະດັບໄປດ້ວຍແກ້ວມໍຣະກົດ (ແກ້ວສີຂຽວ) ສະເຫວີຍ ຖົ່ວງາເປັນອາຫານ, ພຣະຫັດຂວາຊົງຖືຂໍຊ້າງ ພຣະຫັດຊ້າຍຊົງຖືປືນ, ສະເດັດຢືນມາເທິງຫລັງຊ້າງເປັນພາຫະນະ (ຂີ່ຊ້າງ).

ເກນພິຣຸນນະສາດ: ພຣະອາທິດເປັນອະທິບໍດີ, ນາກຫລິ້ນນ້ຳ 4 ໂຕ ບັນດານໃຫ້ຝົນຕົກ 400 ຫ່າ, ໃນນີ້ ຕົກໃນຂອບຈັກກະວານ 160 ຫ່າ ຕົກໃນປ່າຫິມະພານ 120 ຫ່າ,ຕົກໃນມະຫາສະໝຸດ 80 ຫ່າ, ຕົກໃນມະນຸດໂລກ 40 ຫ່າ (ຝົນໜ້ອຍ).

ເກນທາຣາທິຄຸນ: ຕົກຣາສີເຕໂຊ,ນ້ຳຈະໜ້ອຍ, ຝົນຕົ້ນປີຈະຕົກພໍດີ-ກາງປີຈະແລ້ງ-ປາຍປີຈະຕົກຫລາຍ, ນາລຸ່ມຈະດີແຕ່ນາໂພນບໍ່ດີ, ຈະມີລົມພັດແຮງທີ່ສຸດມາຈາກທິດທັງ 4 ຕາມຣະ ດູການ

ເກນທັນຍາຫານ: ຊື່ວ່າ ປັຈສິມະ,ເຂົ້າກ້າໄຮ່ນາຈະໄດ້ແຕ່ 1 ສ່ວນ ເສຍໄປ 5 ສ່ວນ, ໂພຊະນີ ຍາຫານມີພໍຄວນ,ປະຊາຊົນພົນລະເມືອງຈະສຸກແດ່ ທຸກແດ່ ປະປົນກັນໄປ.

ເກນຜະລາມັດສະມັງສາຫານ: ໝາກໄມ້ຈະເປັນດ້ວງເປັນແມງຈຳນວນຫລາຍ, ຊີ້ນປາອາຫານຈະແພງ.

ເກນຣຸກຂະຊາດ : ໄມ້ງິ້ວເປັນພະຍາ,ບ້ານເມືອງຈະສະຫງົບສຸກດີ ແຕ່ຟ້າຝົນບໍ່ສູ້ດີປານໃດ

ເກນກາລະໂຍກ: ວັນພຸດເປັນທຸງໄຊ, ວັນອັງຄານເປັນອະທິບໍດີ, ວັນອາທິດເປັນວັນອຸບາດ, ວັນພະຫັດເປັນໂລກາວິນາດ.

ສ່ວນທາງການນັ້ນອີງຕາມແຈ້ງການເລກທີ 367/ຫສນຍ ລົງວັນທີ 23 ມີນາ 2022 ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ນັ້ນມີສອງຈຸດສຳຄັນ ຄື:

1. ເຫັນດີ ກຳນົດເອົາວັນພຸດ ທີ 13 ເມສາ 2022 ເປັນວັນພັກຊົດເຊີຍປີໃໝ່ລາວ ປີ 2012 ທົດແທນວັນເສົາທີ 16 ເມສາ 2022 ເຊິ່ງເປັນວັນພັກລັດຖະການ. ການສະຫລອງປີໃໝ່ຕ້ອງບົນຈິດ ໃຈປະຢັດມັດທະຍັດທີ່ສຸດ ແລະ ບໍ່ໃຫ້ສຳນັກງານອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ຈັດງານລ້ຽງສະຫລອງປີໃໝ່ ແລະ ອວຍພອນກັນຢ່າງເດັດຂາດ ເພື່ອເປັນແບບຢ່າງໃຫ້ແກ່ສັງຄົມ.

2. ມອບໃຫ້ຄະນະສະເພາະກິດ Covid-19 ຂັ້ນສູນກາງ, ຄະນະສະເພາະກິດນະຄອນຫລວງວຽງຈັນ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ ເປັນຜູ້ຕິກລົງ ແລະ ອອກແຈ້ງການແນະນຳລະອຽດ ເພື່ອໃຫ້ທຸກພາກສ່ວນກ່ຽວຂ້ອງຮັບຊາບ ແລະ ຈັດຕັ້ງປະຕິບັດກ່ຽວກັບມາດຕະການຕ່າງໆ ໃນການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19 ໃນໄລຍະການສະຫລອງບຸນປີໃໝ່ລາວ ໂດຍໃຫ້ອີງໃສ່ສະພາບການລະບາດຕົວຈິງຂອງແຕ່ລະບ່ອນ.

ຈາກແຈ້ງການນີ້ວັນພັກຈະແກ່ຍາວຄື: ວັນທີ 13, 14, 15, 16 ແລະ 17 ເມສາ 2022. ວັນເລີ່ມເຮັດວຽກແມ່ນ 18 ເມສາ 2022 ເປັນຕົ້ນໄປ.

ໃນໂອກາດປີໃໝ່ນີ້, ທາງຄະນະບັນນາທິການພວກເຮົາ ຂໍອວຍພອນໃຫ້ຄະນະພັກ-ຄະນະນຳ ຂອງສະພາແຫ່ງຊາດທຸກໆທ່ານຈົ່ງມີແຕ່ຄວາມສຸກຄວາມຈະເລີນ ສຳເລັດໜ້າທີ່ທຸກປະການ. ປີໃໝ່ຂໍ ໃຫ້ມີແຕ່ສິ່ງດີໆເຂົ້າມາໃນຊີວິດສ່ວນຕົວ ແລະ ຄອບຄົວຂອງບັນດາທ່ານ.

ອວຍພອນເພື່ອນຜູ້ໃຫຍ່ ປີໃໝ່ໂຊກໃຫຍ່ໄຊງາມຫ່າງຫາຍຈາກພະຍາດໂລຄາທັງປວງ ໂດຍສະເພາະພະຍາດລະບາດໂຄວິດ-19.

**ຈາກໃຈຈິງ**
**ກອງບັນນາທິການ**

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ